ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 235 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍການສຶກສາຊັ້ນສູງ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 19/ສພຊ, ລົງວັນທີ 11 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາຊັ້ນສູງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 26/ຄປຈ, ລົງວັນທີ 09 ທັນວາ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍການສຶກສາຊັ້ນສູງ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 19 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 11 / 20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາຊັ້ນສູງ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສຶກສາຊັ້ນສູງ ໃນວາລະກອງປະຊຸມຄັ້ງວັນທີ 11 ພະຈິກ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສຶກສາຊັ້ນສູງ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 87 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2020

# ກົດໝາຍ
# ວ່າດ້ວຍການສຶກສາຊັ້ນສູງ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານການສຶກສາຊັ້ນສູງ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ໄດ້ມາດຕະຖານ, ມີຄຸນນະພາບ ແນໃສ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ, ມີຈັນຍາບັນ, ມີຄວາມຮູ້, ຄວາມສາມາດ, ມີການພັດທະນາທາງດ້ານຮ່າງກາຍ ແລະ ສາມາດຄົ້ນຄວ້າ, ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ສົມຄູ່ກັບວຸດທິການສຶກສາ, ສາມາດເຊື່ອມໂຍງ, ແຂ່ງຂັນກັບ ພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການສຶກສາຊັ້ນສູງ**

ການສຶກສາຊັ້ນສູງ ແມ່ນ ການສຶກສາຖັດຈາກຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ຫຼື ອາຊີວະສຶກສາ ຊຶ່ງມີການຈັດຕັ້ງການຮຽນ-ການສອນໃນລະດັບ ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ ລວມທັງການສຶກສາ ລົງເລິກຂະແໜງວິຊາ, ຊ່ຽວຊານຂັ້ນໜຶ່ງ ແລະ ຊ່ຽວຊານຂັ້ນສອງ ເພື່ອສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໂດຍມີຈຸດໝາຍສ້າງ ແລະ ພັດທະນາ ຜູ້ບໍລິຫານ, ນັກວິຊາການ, ນັກວິຊາສະເພາະ, ນັກຄົ້ນຄວ້າ ແລະ ນັກວິທະຍາສາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຄົ້ນຄວ້າວິທະຍາສາດ** ໝາຍເຖິງ ຂະບວນການຄົ້ນຫາ, ສ້າງຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບປາກົດການ, ທາດແທ້ ແລະ ກົດເກນຂອງທຳມະຊາດ ແລະ ສັງຄົມ ລວມທັງວັດຖຸ ແລະ ຈິນຕະນາການ;

2. **ການຮຽນຮູ້ຕະຫຼອດຊີວິດ** ໝາຍເຖິງ ການສຶກສາທີ່ປະສົມປະສານລະຫວ່າງການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ ລວມທັງການຮຽນຮູ້ຕາມອັດທະຍາໄສ ເພື່ອສົ່ງເສີມໃຫ້ທຸກຄົນ ທັງຍິງ ແລະ ຊາຍ ໄດ້ຮັບການຮຽນຮູ້ຕະຫຼອດໄລຍະທີ່ຍັງມີຊີວິດຢູ່ ສ້າງສັງຄົມພູມປັນຍາ ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ;

3. **ຜູ້ດ້ອຍໂອກາດ** ໝາຍເຖິງ ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ຫຼື ບໍ່ມີເງື່ອນໄຂໃນການເຂົ້າເຖິງການສຶກສາ;

4. **ສະຖານການສຶກສາຊັ້ນສູງ** ໝາຍເຖິງ ບ່ອນດຳເນີນການຮຽນ-ການສອນ ເລີ່ມແຕ່ລະດັບອະນຸປະລິນຍາຂຶ້ນໄປ, ມີການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ;

5. **ສາມລັກສະນະການສຶກສາ** ໝາຍເຖິງ ຈຸດພິເສດທີ່ເປັນລັກສະນະສະເພາະຂອງການສຶກສາລາວ ຊຶ່ງປະກອບດ້ວຍ ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ;

6. **ຫ້າຫຼັກມູນການສຶກສາ** ໝາຍເຖິງ ຫຼັກການ ຫຼື ຈຸດໝາຍພື້ນຖານ ຂອງການສຶກສາ ທີ່ແນໃສ່ສ້າງຄົນຮຸ່ນໃໝ່ໃຫ້ໄດ້ຮັບການພັດທະນາຮອບດ້ານ ແລະ ສົມສ່ວນ ທາງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ ໂດຍໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສັງຄົມນິຍົມ ຊຶ່ງປະກອບດ້ວຍ ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ;

7. **ຫຼັກສູດປົກກະຕິ** ໝາຍເຖິງ ຫຼັກສູດທີ່ມີລາຍວິຊາ ແລະ ໄລຍະການສຶກສາຄົບຖ້ວນ ຕາມຫຼັກສູດແຕ່ລະລະດັບ;

8. **ຫຼັກສູດຕໍ່ເນື່ອງ** ໝາຍເຖິງ ຫຼັກສູດຕໍ່ຍອດຫຼັກສູດໃດໜຶ່ງ ໃນລະດັບທີ່ສູງກວ່າ ໃນສາຂາວິຊາສະເພາະດຽວກັນ ສຳລັບຜູ້ທີ່ສຳເລັດການສຶກສາລະດັບ ອະນຸປະລິນຍາ ຫຼື ອາຊີວະສຶກສາຊັ້ນສູງ;

9. **ໜ່ວຍກິດ** ໝາຍເຖິງ ຫົວໜ່ວຍທີ່ສະແດງເຖິງປະລິມານການຮຽນ-ການສອນໃນແຕ່ລະວິຊາ;

10. **ປະກາສະນິຍະບັດ** ໝາຍເຖິງ ເອກະສານທາງການທີ່ຢັ້ງຢືນວຸດທິການສຶກສາ;

11. **ທຸດຈະລິດ** ໝາຍເຖິງ ຄວາມບໍ່ສັດຊື່ບໍລິສຸດ, ລຳອຽງ ແລະ ການກະທຳອື່ນທີ່ບໍ່ຖືກຕ້ອງ ແລະ ເປັນທຳ;

12. **ນັກສຶກສາແລກປ່ຽນ** ໝາຍເຖິງ ນັກສຶກສາຂອງສະຖານການສຶກສາຊັ້ນສູງ ໃນປະເທດໃດໜຶ່ງ ທີ່ໄດ້ໄປສຶກສາຢູ່ສະຖານການສຶກສາຊັ້ນສູງຂອງຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ລະຫວ່າງລັດຖະບານ ຫຼື ສະຖານການສຶກສາຊັ້ນສູງ ຂອງສອງປະເທດ;

13. **ນະວັດຕະກຳ** ໝາຍເຖິງ ການນຳໃຊ້ຄວາມຮູ້, ຄວາມສາມາດ, ກຳມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ພັດທະນາຜະລິດຕະພັນ, ສິນຄ້າທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ອອກສູ່ສັງຄົມ;

14. **ປັນຍາປະດິດ** ໝາຍເຖິງ ການສ້າງຄວາມສະຫຼາດຫຼັກແຫຼມ ໃຫ້ກັບສິ່ງທີ່ບໍ່ມີຊີວິດ ເພື່ອເຮັດວຽກງານແທນມະນຸດ ໂດຍນຳໃຊ້ເຕັກໂນໂລຊີ ທາງວິທະຍາສາດຄອມພິວເຕີ ແລະ ວິສະວະກຳສາດ;

15. **ອົງການປະກັນຄຸນນະພາບພາຍນອກ** ໝາຍເຖິງ ອົງການຈັດຕັ້ງລັດ ຫຼື ເອກະຊົນ ທີ່ມີຄວາມເປັນເອກະລາດ, ຢູ່ພາຍນອກການຄຸ້ມຄອງຂອງສະຖານການສຶກສາຊັ້ນສູງ, ຖືກຮັບຮູ້ຈາກກະຊວງສຶກສາທິການ ແລະ ກິລາ ໃຫ້ດຳເນີນການປະເມີນຄຸນນະພາບສະຖານການສຶກສາຊັ້ນສູງ ຕາມມາດຕະຖານທີ່ກຳນົດໄວ້;

16. **ການວັດຜົນການຮຽນ** ໝາຍເຖິງ ຂະບວນການຈັດຫາຂໍ້ມູນ ກ່ຽວກັບຜົນສຳເລັດການສຶກສາຂອງນັກສຶກສາ ເພື່ອນຳໄປສູ່ການຕັດສິນຄຸນຄ່າ ດ້ວຍຫຼາຍວິທີການ ເຊັ່ນ ການກວດກາ, ການສອບເສັງ ແລະ ອື່ນໆ;

17. **ການປະເມີນຜົນການຮຽນ** ໝາຍເຖິງ ການນຳເອົາຜົນຂອງການວັດຜົນມາຕັດສິນຄຸນຄ່າ ຂອງຜົນສຳເລັດທາງການຮຽນຮູ້ຂອງນັກສຶກສາ;

18. **ສະພາວິທະຍາໄລ** ໝາຍເຖິງ ການຈັດຕັ້ງສູງສຸດ ທີ່ບໍ່ປະຈຳການຢູ່ໃນໂຄງປະກອບການຈັດຕັ້ງຂອງວິທະຍາໄລ ເຮັດໜ້າທີ່ໃຫ້ຄຳປຶກສາທາງດ້ານການບໍລິຫານ ແລະ ວິຊາການ;

19. **ສະພາສະຖາບັນ** ໝາຍເຖິງ ການຈັດຕັ້ງສູງສຸດ ທີ່ບໍ່ປະຈຳການຢູ່ໃນໂຄງປະກອບການຈັດຕັ້ງຂອງສະຖາບັນ ເຮັດໜ້າທີ່ໃຫ້ຄຳປຶກສາທາງດ້ານການບໍລິຫານ ແລະ ວິຊາການ;

20. **ສະພາມະຫາວິທະຍາໄລ** ໝາຍເຖິງ ການຈັດຕັ້ງສູງສຸດ ທີ່ບໍ່ປະຈຳການຢູ່ໃນໂຄງປະກອບການຈັດຕັ້ງຂອງມະຫາວິທະຍາໄລ ເຮັດໜ້າທີ່ໃຫ້ຄຳປຶກສາທາງດ້ານການບໍລິຫານ ແລະ ວິຊາການ;

21. **ສະພາບໍລິຫານ** ໝາຍເຖິງ ການຈັດຕັ້ງທີ່ບໍ່ປະຈຳການ ຢູ່ໃນໂຄງປະກອບການຈັດຕັ້ງຂອງສະຖານການສຶກສາຊັ້ນສູງ ເຮັດໜ້າທີ່ເປັນທີ່ປຶກສາທາງດ້ານການບໍລິຫານ;

22. **ສະພາວິຊາການ** ໝາຍເຖິງ ການຈັດຕັ້ງທີ່ບໍ່ປະຈຳການ ຢູ່ໃນໂຄງປະກອບການຈັດຕັ້ງຂອງສະຖານການສຶກສາຊັ້ນສູງ ເຮັດໜ້າທີ່ເປັນທີ່ປຶກສາທາງດ້ານວິຊາການ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການສຶກສາຊັ້ນສູງ

ລັດ ສົ່ງເສີມ ໃຫ້ພົນລະເມືອງລາວ ສາມາດເຂົ້າເຖິງການສຶກສາຊັ້ນສູງ ຕາມ ຄວາມຮູ້, ຄວາມສາມາດ, ຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງໃນແຕ່ລະໄລຍະ.

ລັດ ສົ່ງເສີມ, ລົງທຶນ ແລະ ພັດທະນາວຽກງານການສຶກສາຊັ້ນສູງ ໃຫ້ມີການຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ທັງປະລິມານ ແລະ ຄຸນນະພາບ ລວມທັງ ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການບໍລິການວິຊາການແກ່ສັງຄົມ ແລະ ຊຸມຊົນ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ຊຸກຍູ້, ສົ່ງເສີມ ແລະ ນຳໃຊ້ ຜູ້ຮຽນເກັ່ງ, ຜູ້ມີພອນສະຫວັນ ແລະ ຄວາມສາມາດພິເສດ ລວມທັງຜູ້ດ້ອຍໂອກາດ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດລົງທຶນ ແລະ ມີສ່ວນຮ່ວມເຂົ້າໃນການພັດທະນາວຽກງານການສຶກສາຊັ້ນສູງ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານການສຶກສາຊັ້ນສູງ

ການເຄື່ອນໄຫວວຽກງານການສຶກສາຊັ້ນສູງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ ໃນແຕ່ລະໄລຍະ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການຈັດຕັ້ງການຮຽນ-ການສອນຕາມສາມລັກສະນະ ແລະ ຫ້າຫຼັກມູນການສຶກສາ;

4. ຮັບປະກັນການຮຽນທິດສະດີ ໄປຄວບຄູ່ກັບພາກປະຕິບັດຕົວຈິງ, ການຮຽນ-ການສອນ ແບບປົກກະຕິ, ຕໍ່ເນື່ອງ ແລະ ການຮຽນຮູ້ຕະຫຼອດຊີວິດ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

6. ມີຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານການສຶກສາຊັ້ນສູງ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາຊັ້ນສູງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ການຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ, ການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການບໍລິການວິຊາການ, ການຄຸ້ມຄອງບໍລິຫານ ແລະ ຊອກຫາແຫຼ່ງທຶນ ເພື່ອສ້າງ ແລະ ພັດທະນາຊັບພະຍາກອນມະນຸດສະເພາະດ້ານ ຕາມແຜນການຮ່ວມມື, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ

**ມາດຕາ 8 ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ**

ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ ແມ່ນ ການກຳນົດວິໄສທັດ, ທິດທາງລວມ, ເປົ້າໝາຍ, ຄາດໝາຍ, ເນື້ອໃນຍຸດທະສາດ, ແຜນງານ ແລະ ໂຄງການ ເພື່ອແກ້ໄຂບັນຫາທີ່ເປັນບຸລິມະສິດ ໃນການພັດທະນາວຽກງານການສຶກສາຊັ້ນສູງ ໃຫ້ມີຄຸນນະພາບ, ມີຄວາມສະເໝີພາບ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 9 ການສ້າງແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ**

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຄົ້ນຄວ້າສ້າງແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ ລວມທັງການສັງລວມແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງຂອງສະຖາບັນການສຶກສາຊັ້ນສູງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຂົ້າເປັນແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ ແລ້ວສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ.

**ມາດຕາ 10 ເນື້ອໃນແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ**

ແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ ໃຫ້ມີເນື້ອໃນ ດັ່ງນີ້:

1. ການສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສິນທຳ ປະຕິວັດ, ຈັນຍາບັນ, ຄວາມຮູ້, ຄວາມສາມາດ ແລະ ການພັດທະນາທາງດ້ານຮ່າງກາຍ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ໃນແຕ່ລະໄລຍະ;

2. ການປັບປຸງຄຸນນະພາບການຮຽນ-ການສອນ ໂດຍເນັ້ນໃສ່ທ່າແຮງຂອງຊາດ ແລະ ຂອງທ້ອງຖິ່ນ;

3. ການສົ່ງເສີມການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຊີ, ການບໍລິການວິຊາການ ແລະ ແຜນງານປັນຍາປະດິດ;

4. ການປັບປຸງລະບົບການປະກັນຄຸນນະພາບ, ການບໍລິຫານ ແລະ ຄຸ້ມຄອງການສຶກສາຊັ້ນສູງ;

5. ການເພີ່ມທະວີການຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ.

## ພາກທີ III
## ວຸດທິການສຶກສາຊັ້ນສູງ

**ມາດຕາ 11 ວຸດທິການສຶກສາຊັ້ນສູງ**

ວຸດທິການສຶກສາຊັ້ນສູງ ແມ່ນ ການຢັ້ງຢືນຜົນສຳເລັດຂອງການສຶກສາຊັ້ນສູງໃດໜຶ່ງ ຕາມລະດັບການສຶກສາຊັ້ນສູງ ຊຶ່ງກຳນົດໄວ້ໃນປະກາສະນີຍະບັດ.

**ມາດຕາ 12 ຂອບວຸດທິການສຶກສາຊັ້ນສູງ**

ຂອບວຸດທິການສຶກສາຊັ້ນສູງ ແມ່ນ ການກຳນົດວຸດທິການສຶກສາຊັ້ນສູງ ແຕ່ລະລະດັບ ໂດຍກຳນົດຂົງເຂດຄວາມຮູ້, ຄວາມຊຳນານງານ ແລະ ປະສົບການຂອງຜູ້ຮຽນແຕ່ລະລະດັບ ຊຶ່ງເລີ່ມຈາກ ອະນຸປະລິນຍາ ເຖິງ ປະລິນຍາເອກ.

**ມາດຕາ 13 ລະດັບວຸດທິການສຶກສາຊັ້ນສູງ**

ວຸດທິການສຶກສາຊັ້ນສູງ ມີ ສີ່ລະດັບ ດັ່ງນີ້:

1. ອະນຸປະລິນຍາ;
2. ປະລິນຍາຕີ;
3. ປະລິນຍາໂທ;
4. ປະລິນຍາເອກ.

ນອກຈາກນີ້ ຍັງມີວຸດທິການສຶກສາລົງເລິກຂະແໜງວິຊາ, ຊ່ຽວຊານຂັ້ນໜຶ່ງ ແລະ ຊ່ຽວຊານຂັ້ນສອງຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 14 ອະນຸປະລິນຍາ**

ອະນຸປະລິນຍາ ແມ່ນ ການສຶກສາວິຊາການລະດັບຕົ້ນ ຂອງການສຶກສາຊັ້ນສູງໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ຫຼື ອາຊີວະສຶກສາ ຊັ້ນກາງ ຊຶ່ງມີໄລຍະການຮຽນ ສອງປີ ຂຶ້ນໄປ ສຳລັບຫຼັກສູດປົກກະຕິ ຫຼື ໜຶ່ງປີເຄິ່ງ ຂຶ້ນໄປ ສຳລັບຫຼັກສູດຕໍ່ເນື່ອງ ເພື່ອໃຫ້ຜູ້ຮຽນມີຄວາມຮູ້ພື້ນຖານທາງດ້ານທິດສະດີ ແລະ ເຕັກນິກໃນບາງດ້ານຂອງສາຂາວິຊາສະເພາະທີ່ໄດ້ຮຽນມາ, ມີທັກສະພື້ນຖານໃນການວິເຄາະ ແລະ ຮຽນຮູ້ ດ້ວຍຕົນເອງ, ມີຄວາມຮັບຜິດຊອບຕໍ່ວຽກງານ, ສາມາດປະຕິບັດວຽກງານ ຕາມຄວາມຮູ້ວິຊາສະເພາະຂອງຕົນ.

ຜູ້ຮຽນຈົບວິຊາຊີບຊັ້ນສູງ ໃນສາຍອາຊີວະສຶກສາ ກໍມີວຸດທິການສຶກສາລະດັບດຽວກັນກັບອະນຸປະລິນຍາ.

**ມາດຕາ 15 ປະລິນຍາຕີ**

ປະລິນຍາຕີ ແມ່ນ ການສຶກສາວິຊາການລະດັບເໜືອອະນຸປະລິນຍາ ໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ຫຼື ອາຊີວະສຶກສາຊັ້ນສູງ ຫຼື ອະນຸປະລິນຍາ ຊຶ່ງມີໄລຍະການຮຽນ ສີ່ປີ ຂຶ້ນໄປ ສຳລັບຫຼັກສູດປົກກະຕິ ຫຼື ສອງປີ ຂຶ້ນໄປ ສຳລັບຫຼັກສູດຕໍ່ເນື່ອງ ເພື່ອໃຫ້ຜູ້ຮຽນມີຄວາມຮູ້ ທາງດ້ານທິດສະດີ ແລະ ເຕັກນິກ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໃນສາຂາວິຊາສະເພາະທີ່ໄດ້ຮຽນມາ, ມີທັກສະໃນການວິເຄາະຢ່າງລະອຽດ ແລະ ຮອບຄອບ, ເປັນນັກວິຊາການ ທີ່ມີຄວາມສາມາດ, ມີຄວາມຮັບຜິດຊອບຕໍ່ວຽກງານ, ເປັນເຈົ້າການໃນການປະຕິບັດໜ້າທີ່ ຕາມຄວາມຮູ້ວິຊາສະເພາະຂອງຕົນ.

**ມາດຕາ 16 ປະລິນຍາໂທ**

ປະລິນຍາໂທ ແມ່ນ ການສຶກສາວິຊາການລະດັບເໜືອປະລິນຍາຕີ ໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກປະລິນຍາຕີ ຊຶ່ງມີໄລຍະການຮຽນ ສອງປີ ຂຶ້ນໄປ ເພື່ອໃຫ້ຜູ້ຮຽນມີຄວາມຮູ້ກວ້າງຂວາງ, ໜັກແໜ້ນ ແລະ ເລິກເຊິ່ງ ໃນສາຂາວິຊາສະເພາະທີ່ໄດ້ຮຽນມາ, ມີທັກສະໃນການຄົ້ນຄິດລະດັບສູງ, ສາມາດຄົ້ນຄວ້າວິທະຍາສາດ ເພື່ອຕໍ່ຍອດ ຫຼື ເສີມຂະຫຍາຍຄວາມຮູ້ທີ່ມີຢູ່, ສາມາດປະຕິບັດວຽກງານດ້ວຍຕົນເອງ ແລະ ນຳພາຜູ້ອື່ນ ຕາມຄວາມຮູ້ວິຊາສະເພາະຂອງຕົນ.

**ມາດຕາ 17 ປະລິນຍາເອກ**

ປະລິນຍາເອກ ແມ່ນ ການສຶກສາວິຊາການລະດັບສູງສຸດ ທີ່ລົງເລິກຄົ້ນຄວ້າວິທະຍາສາດ ໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກປະລິນຍາໂທ ຊຶ່ງມີໄລຍະການຮຽນ ສາມປີ ຂຶ້ນໄປ ເພື່ອໃຫ້ຜູ້ຮຽນມີຄວາມຮູ້ໃນລະດັບກວ້າງຂວາງ, ໜັກແໜ້ນ ແລະ ເລິກເຊິ່ງ ໃນສາຂາວິຊາສະເພາະທີ່ໄດ້ຮຽນມາ, ມີທັກສະໃນການຄົ້ນຄວ້າວິທະຍາສາດ ຢ່າງເປັນເອກະລາດ, ມີຫົວຄິດປະດິດສ້າງ, ພັດທະນານະວັດຕະກຳ, ຄົ້ນພົບສິ່ງໃໝ່ ທາງທຳມະຊາດ ແລະ ສັງຄົມ, ສາມາດປະຕິບັດວຽກງານດ້ວຍຕົນເອງ ແລະ ນຳພາຜູ້ອື່ນ ຕາມຄວາມຮູ້ວິຊາສະເພາະຂອງຕົນ.

**ມາດຕາ 18 ຊື່ວຸດທິການສຶກສາຊັ້ນສູງ**

ຊື່ວຸດທິການສຶກສາຊັ້ນສູງ ໄດ້ກຳນົດ ດັ່ງນີ້:

1. ອະນຸປະລິນຍາ (Associate Degree) ຂຽນຫຍໍ້ວ່າ: ອປ.;
2. ປະລິນຍາຕີ (Bachelor Degree) ຂຽນຫຍໍ້ວ່າ: ປຕ.;

3. ປະລິນຍາໂທ (Master Degree) ຂຽນຫຍໍ້ວ່າ: ປທ.;

4. ປະລິນຍາເອກ (Doctoral Degree) ຂຽນຫຍໍ້ວ່າ: ປອ.;

5. ລິງເລີກຂະແໜງວິຊາ (Graduate Diploma) ຂຽນຫຍໍ້ວ່າ: ລຂ.;

6. ຊ່ຽວຊານຂັ້ນໜຶ່ງ (First Degree Diploma of Specialization) ຂຽນຫຍໍ້ວ່າ: ຊຊ I.;

7. ຊ່ຽວຊານຂັ້ນສອງ (Second Degree Diploma of Specialization) ຂຽນຫຍໍ້ວ່າ: ຊຊ II..

ສຳລັບລາຍລະອຽດຂອງການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 19 ການຮັບຮູ້ ແລະ ຢັ້ງຢືນວຸດທິການສຶກສາຊັ້ນສູງຈາກຕ່າງປະເທດ**

ວຸດທິການສຶກສາຊັ້ນສູງ ທຸກລະດັບຈາກຕ່າງປະເທດ ຕ້ອງໄດ້ຮັບການຮັບຮູ້ ແລະ ຢັ້ງຢືນວຸດທິການສຶກສາ ໂດຍກະຊວງສຶກສາທິການ ແລະ ກິລາ.

## ພາກທີ IV
## ສະຖານການສຶກສາຊັ້ນສູງ
### ໝວດທີ 1
### ປະເພດສະຖານການສຶກສາຊັ້ນສູງ

**ມາດຕາ 20 ປະເພດສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ມີ ສີ່ປະເພດ ດັ່ງນີ້:

1. ວິທະຍາໄລ;
2. ສະຖາບັນ;
3. ວິທະຍາຄານ;
4. ມະຫາວິທະຍາໄລ.

**ມາດຕາ 21 ວິທະຍາໄລ**

ວິທະຍາໄລ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ຈັດຕັ້ງການຮຽນ-ການສອນລະດັບ ອະນຸປະລິນຍາ ແລະ ຝຶກອົບຮົມວິຊາສະເພາະໄລຍະສັ້ນ ເພື່ອສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຄວາມຮູ້, ຄວາມສາມາດ ແລະ ການພັດທະນາທາງດ້ານຮ່າງກາຍ.

**ມາດຕາ 22 ສະຖາບັນ**

ສະຖາບັນ ແມ່ນ ສະຖານການສຶກສາຊັ້ນສູງທີ່ຈັດຕັ້ງການຮຽນ-ການສອນລະດັບ ອະນຸປະລິນຍາ, ປະລິນຍາຕີ ແລະ ຝຶກອົບຮົມວິຊາສະເພາະໄລຍະສັ້ນ, ດຳເນີນການຄົ້ນຄວ້າວິທະຍາສາດ ແລະ ໃຫ້ການບໍລິການວິຊາການຂອງ

ຂະແໜງການ ເພື່ອສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຄວາມຮູ້, ຄວາມສາມາດ ແລະ ການພັດທະນາທາງດ້ານຮ່າງກາຍ.

ສຳລັບສະຖາບັນ ທຽບເທົ່າມະຫາວິທະຍາໄລນັ້ນ ສາມາດຈັດຕັ້ງການຮຽນ-ການສອນຄືກັນກັບມະຫາວິທະຍາໄລ.

**ມາດຕາ 23 ວິທະຍາຄານ**

ວິທະຍາຄານ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ຈັດຕັ້ງການຮຽນ-ການສອນລະດັບ ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ແລະ ຝຶກອົບຮົມວິຊາສະເພາະໄລຍະສັ້ນ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດຳເນີນການຄົ້ນຄວ້າວິທະຍາສາດ ແລະ ໃຫ້ການບໍລິການວິຊາການຂອງຂະແໜງການ ເພື່ອສ້າງ ແລະ ພັດທະນາທະຫານ, ຕຳຫຼວດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຄວາມຮູ້, ຄວາມສາມາດ, ການພັດທະນາທາງດ້ານຮ່າງກາຍ, ເຂັ້ມແຂງ ແລະ ທັນສະໄໝ.

ສຳລັບວິທະຍາຄານ ທຽບເທົ່າມະຫາວິທະຍາໄລນັ້ນ ສາມາດຈັດຕັ້ງການຮຽນ-ການສອນຄືກັນກັບມະຫາວິທະຍາໄລ.

**ມາດຕາ 24 ມະຫາວິທະຍາໄລ**

ມະຫາວິທະຍາໄລ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ຈັດຕັ້ງການຮຽນ-ການສອນ ແຕ່ລະດັບອະນຸປະລິນຍາເຖິງ ລະດັບປະລິນຍາເອກ ແລະ ຝຶກອົບຮົມວິຊາສະເພາະໄລຍະສັ້ນ ໃນຫຼາຍສາຂາວິຊາ, ດຳເນີນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ໃຫ້ການບໍລິການວິຊາການແກ່ສັງຄົມ ເພື່ອສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຄວາມຮູ້, ຄວາມສາມາດ ແລະ ການພັດທະນາທາງດ້ານຮ່າງກາຍ.

ສຳລັບມະຫາວິທະຍາໄລແຫ່ງຊາດນັ້ນ ຍັງເປັນສູນກາງໃນການດຳເນີນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີລະດັບຊາດ ໃນຫຼາຍສາຂາວິຊາ ແລະ ຫຼາຍຂົງເຂດ ທີ່ມີຄຸນນະພາບສູງ, ໃຫ້ການບໍລິການວິຊາການແກ່ສັງຄົມ, ໄດ້ຮັບນະໂຍບາຍສະເພາະຂອງລັດຖະບານ ໃນການລົງທຶນພັດທະນາ ແລະ ມີມາດຕະຖານກ້າວໄປສູ່ພາກພື້ນ ແລະ ສາກົນ.

**ມາດຕາ 25 ການຄຸ້ມຄອງສະຖານການສຶກສາຊັ້ນສູງ**

ກະຊວງສຶກສາທິການ ແລະ ກິລາ, ກະຊວງ ແລະ ອົງການອື່ນ ຄຸ້ມຄອງສະຖານການສຶກສາຊັ້ນສູງ ທຸກປະເພດທີ່ຂຶ້ນກັບຕົນ ດ້ວຍການກຳນົດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ເພື່ອຕິດຕາມ, ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວ, ການສ້າງ ແລະ ພັດທະນາຫຼັກສູດ, ການຈັດຕັ້ງການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ, ການພົວພັນຮ່ວມມື ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບ, ຖືກຕ້ອງ ແລະ ເປັນເອກະພາບ.

**ມາດຕາ 26 ຮູບແບບຂອງສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ໄດ້ຈັດຮູບແບບຕາມການຄຸ້ມຄອງ ດັ່ງນີ້:

1. ສະຖານການສຶກສາຊັ້ນສູງລະດັບຊາດ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ສ້າງຕັ້ງຂຶ້ນໂດຍລັດຖະບານ ອີງຕາມນະໂຍບາຍ, ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ສະຖານການສຶກສາຊັ້ນສູງລະດັບພາກ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ສ້າງຕັ້ງຂຶ້ນໂດຍລັດຖະບານ ອີງຕາມຄວາມຕ້ອງການດ້ານການພັດທະນາຊັບພະຍາກອນມະນຸດ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ຢູ່ແຕ່ລະພາກຂອງປະເທດ, ສອດຄ່ອງກັບຈຸດພິເສດ ແລະ ຄວາມຕ້ອງການຕົວຈິງຂອງພາກ;

3. ສະຖານການສຶກສາຊັ້ນສູງລະດັບ ແຂວງ, ນະຄອນຫຼວງ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ສ້າງຂຶ້ນໂດຍສູນກາງຮ່ວມກັບອົງການປົກຄອງທ້ອງຖິ່ນ ອີງຕາມຄວາມຕ້ອງການໃນການພັດທະນາຊັບພະຍາກອນມະນຸດ ແລະ ສອດຄ່ອງກັບຈຸດພິເສດຂອງ ແຂວງ, ນະຄອນຫຼວງ;

4. ສະຖານການສຶກສາຊັ້ນສູງສະເພາະຂະແໜງການ ແມ່ນ ສະຖານການສຶກສາຊັ້ນສູງ ທີ່ສ້າງຕັ້ງຂຶ້ນໂດຍຂະແໜງການທີ່ກ່ຽວຂ້ອງ ອີງຕາມຄວາມຕ້ອງການໃນການພັດທະນາຊັບພະຍາກອນມະນຸດ ສະເພາະຂະແໜງການນັ້ນ ຢູ່ຂັ້ນສູນກາງ ຫຼື ທ້ອງຖິ່ນ.

**ມາດຕາ 27 ສິດເປັນເຈົ້າຕົນເອງຂອງສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ໄດ້ຮັບສິດເປັນເຈົ້າຕົນເອງ ມີກໍລະນີ ດັ່ງນີ້:

1. ໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ຫຼື ການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;

2. ມີຄວາມໂດດເດັ່ນທາງດ້ານວິຊາການ ແລະ ມີການຮັບຮອງຈາກອົງການປະກັນຄຸນນະພາບພາຍນອກ;

3. ມີຄວາມພ້ອມດ້ານການບໍລິຫານຄຸ້ມຄອງ.

ສໍາລັບເງື່ອນໄຂ ແລະ ມາດຕະຖານ ກ່ຽວກັບສິດເປັນເຈົ້າຕົນເອງໃນແຕ່ລະດ້ານ ຂອງສະຖານການສຶກສາຊັ້ນສູງນັ້ນ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງສະຖານການສຶກສາຊັ້ນສູງ

**ມາດຕາ 28 ໂຄງປະກອບການຈັດຕັ້ງຂອງສະຖານການສຶກສາຊັ້ນສູງ**

ວິທະຍາໄລ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາວິທະຍາໄລ;
2. ສະພາບໍລິຫານ ແລະ ສະພາວິຊາການ;
3. ຄະນະອໍານວຍການວິທະຍາໄລ;
4. ຫ້ອງການ ຫຼື ພະແນກ;
5. ພາກວິຊາ ຫຼື ສາຍວິຊາ;

6. ຫົວໜ່ວຍບໍລິຫານ ແລະ ວິຊາການອື່ນ ທີ່ຂຶ້ນກັບວິທະຍາໄລ.

ສະຖາບັນ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາສະຖາບັນ;
2. ສະພາບໍລິຫານ ແລະ ສະພາວິຊາການ;
3. ຄະນະອຳນວຍການສະຖາບັນ;
4. ຫ້ອງການ;
5. ພະແນກ;
6. ພາກວິຊາ;
7. ຫົວໜ່ວຍບໍລິຫານ ແລະ ວິຊາການອື່ນ ທີ່ຂຶ້ນກັບສະຖາບັນ.

ມະຫາວິທະຍາໄລ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາມະຫາວິທະຍາໄລ;
2. ສະພາບໍລິຫານ ແລະ ສະພາວິຊາການ;
3. ຄະນະອະທິການບໍດີ;
4. ຄະນະວິຊາ ແລະ ສະຖາບັນ;
5. ຫ້ອງການ;
6. ພາກວິຊາ;
7. ພະແນກ;
8. ຫົວໜ່ວຍບໍລິຫານ ແລະ ວິຊາການອື່ນ ທີ່ຂຶ້ນກັບມະຫາວິທະຍາໄລ.

ສຳລັບໂຄງປະກອບການຈັດຕັ້ງຂອງວິທະຍາຄານ ແລະ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 29 ໂຄງປະກອບບຸກຄະລາກອນ ຂອງສະຖານການສຶກສາຊັ້ນສູງ**

ວິທະຍາໄລ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ປະທານ, ຮອງປະທານ ແລະ ກຳມະການ ສະພາວິທະຍາໄລ;
2. ປະທານ, ຮອງປະທານ ແລະ ກຳມະການ ສະພາບໍລິຫານ ແລະ ສະພາວິຊາການ;
3. ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ວິທະຍາໄລ;
4. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ ຫຼື ພະແນກ;
5. ຫົວໜ້າ ແລະ ຮອງຫົວໜ້າ ພາກວິຊາ ຫຼື ສາຍວິຊາ;
6. ຫົວໜ້າໜ່ວຍວິຊາການອື່ນ ທີ່ຂຶ້ນກັບວິທະຍາໄລ.

ສະຖາບັນມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ປະທານ, ຮອງປະທານ ແລະ ກຳມະການ ສະພາສະຖາບັນ;
2. ປະທານ, ຮອງປະທານ ແລະ ກຳມະການ ສະພາບໍລິຫານ ແລະ ສະພາວິຊາການ;
3. ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ສະຖາບັນ;
4. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ;
5. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ;
6. ຫົວໜ້າ ແລະ ຮອງຫົວໜ້າ ພາກວິຊາ;
7. ຫົວໜ້າໜ່ວຍວິຊາການອື່ນ ທີ່ຂຶ້ນກັບສະຖາບັນ.

ມະຫາວິທະຍາໄລ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ປະທານ, ຮອງປະທານ ແລະ ກຳມະການສະພາມະຫາວິທະຍາໄລ;
2. ປະທານ, ຮອງປະທານ ແລະ ກຳມະການ ສະພາບໍລິຫານ ແລະ ສະພາວິຊາການ;
3. ອະທິການບໍດີ ແລະ ຮອງອະທິການບໍດີ;
4. ຄະນະບໍດີ ແລະ ຮອງຄະນະບໍດີ ແລະ ຫົວໜ້າ ແລະ ຮອງຫົວໜ້າ ສະຖາບັນ;
5. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ;
6. ຫົວໜ້າ ແລະ ຮອງຫົວໜ້າ ພາກວິຊາ;
7. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ;
8. ຫົວໜ້າໜ່ວຍວິຊາການອື່ນ ທີ່ຂຶ້ນກັບມະຫາວິທະຍາໄລ.

ສຳລັບໂຄງປະກອບບຸກຄະລາກອນຂອງວິທະຍາຄານ ແລະ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາຊັ້ນສູງ;
2. ອອກລະບຽບການພາຍໃນ ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດວຽກງານ ແລະ ການເຄື່ອນໄຫວຂອງຄູ, ບຸກຄະລາກອນ ແລະ ນັກສຶກສາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ຈັດຕັ້ງການຮຽນ-ການສອນ ແລະ ການຝຶກອົບຮົມ ໃຫ້ມີຄຸນນະພາບ ແລະ ຄົບເນື້ອໃນຫຼັກສູດ;
4. ຈັດຕັ້ງການຄົ້ນຄວ້າ ແລະ ເຜີຍແຜ່ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ;
5. ໃຫ້ການບໍລິການວິຊາການໃຫ້ແກ່ສັງຄົມ ແລະ ຊຸມຊົນ;
6. ຄຸ້ມຄອງ ແລະ ປັບປຸງການຈັດຕັ້ງຂອງຕົນ ໃຫ້ເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນ;

7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ສ້ອມແປງ ອາຄານ, ສະຖານທີ່, ວັດຖຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ຕາມລະບຽບການ;

8. ເກັບ ແລະ ຄຸ້ມຄອງ ຄ່າຮຽນ, ຄ່າລົງທະບຽນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

9. ພິຈາລະນາການຮັບ ແລະ ບັນຈຸ ຄູ, ບຸກຄະລາກອນ ແລະ ນັກສຶກສາ ຢູ່ສະຖານການສຶກສາຂອງຕົນ ຕາມແຜນການ ແລະ ລະບຽບການ;

10. ຍ້ອງຍໍ ແລະ ລົງວິໄນ ຕໍ່ ຄູ, ບຸກຄະລາກອນ ແລະ ນັກສຶກສາ ຢູ່ສະຖານການສຶກສາຕົນ ຕາມລະບຽບການ;

11. ຕ້ານ ແລະ ສະກັດກັ້ນ ປາກົດການຫຍໍ້ທໍ້, ປົກປັກຮັກສາສິ່ງແວດລ້ອມ, ອະນຸລັກ ແລະ ສົ່ງເສີມສີລະປະວັດທະນະທຳຂອງຊາດ ສົມທົບກັບການຮັບເອົາວັດທະນະທຳອັນດີງາມ ແລະ ກ້າວໜ້າຂອງໂລກ;

12. ປະສານສົມທົບ ແລະ ຮ່ວມມື ກັບອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ;

13. ຕິດຕາມ, ກວດກາ, ປະເມີນຜົນວຽກງານຂອງຕົນ ເພື່ອລາຍງານຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບ ສິດ ແລະ ໜ້າທີ່ລະອຽດ ຂອງສະຖານການສຶກສາຊັ້ນສູງນັ້ນ ໄດ້ກຳນົດໄວ້ໃນລະບຽບການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແຕ່ລະສະຖານການສຶກສາຊັ້ນສູງ.

## ໝວດທີ 3
## ການສ້າງຕັ້ງ ແລະ ຍຸບເລີກ

### ມາດຕາ 31 ການສ້າງຕັ້ງສະຖານການສຶກສາຊັ້ນສູງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງສະຖານການສຶກສາຊັ້ນສູງ ຕ້ອງໃຫ້ສອດຄ່ອງກັບແຜນຍຸດທະສາດການພັດທະນາການສຶກສາຊັ້ນສູງ, ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

ການສ້າງຕັ້ງສະຖານການສຶກສາຊັ້ນສູງ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

### ມາດຕາ 32 ການອະນຸຍາດສ້າງຕັ້ງສະຖານການສຶກສາຊັ້ນສູງ

ການອະນຸຍາດສ້າງຕັ້ງສະຖານການສຶກສາຊັ້ນສູງ ແຕ່ລະປະເພດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 33 ການຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ທີ່ມີຈຸດປະສົງຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບ ການຈັດຕັ້ງພາຍໃນສະຖາບັນການສຶກສາຊັ້ນສູງຂອງຕົນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານ ຂໍອະນຸຍາດນຳກະຊວງສຶກສາທິການ ແລະ ກິລາ ຕາມລະບຽບການ.

**ມາດຕາ 34 ການໂຈະສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເຄື່ອນໄຫວບໍ່ຖືກກັບພາລະບົດບາດ ແລະ ຈຸດປະສົງເປົ້າໝາຍ ຂອງສະຖາບັນການສຶກສາຊັ້ນສູງ;
2. ບໍ່ປັບປຸງ ຫຼື ບໍ່ພັດທະນາຄຸນນະພາບ ຕາມການແນະນຳ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
3. ມີຄຳຮ້ອງຂໍໂຈະ ດ້ວຍຄວາມສະໝັກໃຈຂອງສະຖາບັນການສຶກສາຊັ້ນສູງ ຫຼື ຕາມການສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 35 ການຍຸບເລີກສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ຈະຖືກຍຸບເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ບໍ່ແກ້ໄຂ, ບໍ່ປັບປຸງຂໍ້ຜິດພາດ ໃນການດຳເນີນກິດຈະການທີ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ມີຄຳຮ້ອງຂໍຍຸບເລີກ ດ້ວຍຄວາມສະໝັກໃຈຂອງຕົນ ຫຼື ຕາມການສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ຖືກຖອນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ;
5. ຖືກສານປະຊາຊົນຕັດສິນໃຫ້ຍຸບເລີກ;
6. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

# ພາກທີ V
# ຫຼັກສູດ ແລະ ການຈັດຕັ້ງການຮຽນ-ການສອນ

## ໝວດທີ 1
## ຫຼັກສູດ

**ມາດຕາ 36 ຫຼັກສູດການສຶກສາຊັ້ນສູງ**

ຫຼັກສູດການສຶກສາຊັ້ນສູງ ແມ່ນ ເອກະສານທີ່ກຳນົດຫຼັກການ, ຈຸດໝາຍຂອງການສຶກສາ, ໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການ ແລະ ເວລາໃນການຈັດຕັ້ງການຮຽນ-ການສອນ, ການວັດຜົນ ແລະ ປະເມີນຜົນ.

**ມາດຕາ 37 ການສ້າງ ແລະ ພັດທະນາຫຼັກສູດ**

ສະຖາບັນການສຶກສາຊັ້ນສູງ ເປັນຜູ້ສ້າງ ແລະ ພັດທະນາຫຼັກສູດຂອງຕົນ ຕາມສາມລັກສະນະ ແລະ ຫ້າຫຼັກມູນການສຶກສາ ໂດຍສອດຄ່ອງກັບມາດຕະຖານຫຼັກສູດແຫ່ງຊາດ, ຂອບວຸດທິການສຶກສາຊັ້ນສູງ ແລະ ສະພາບຕົວຈິງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມີລັກສະນະຕໍ່ເນື່ອງແຕ່ລະລະດັບວຸດທິການສຶກສາ ຊຶ່ງສ້າງເປັນຕໍາລາ ແລະ ເອກະສານການຮຽນ-ການສອນ ແຕ່ລະລາຍວິຊາ ທີ່ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ຫຼັກສູດການສຶກສາຊັ້ນສູງ ຈັດເປັນລະບົບໜ່ວຍກິດ ຕາມຫຼັກສູດປົກກະຕິ ແລະ ຕໍ່ເນື່ອງ ໂດຍຮັບປະກັນໃຫ້ມີການສຶກສາ ພາກທິດສະດີ, ພາກປະຕິບັດ ແລະ ພາກສະໜາມ ຫຼື ການຝຶກງານ.

ຫຼັກສູດການສຶກສາຊັ້ນສູງ ຕ້ອງໄດ້ຮັບການປະເມີນ ພາຍຫຼັງສໍາເລັດການຈັດຕັ້ງການຮຽນ-ການສອນນັກສຶກສາ ສອງຮຸ່ນ ຊຶ່ງແມ່ນສະຖາບັນການສຶກສາຊັ້ນສູງ ເປັນຜູ້ປະເມີນ ດ້ວຍວິທີການ ຕິດຕາມຄຸນນະພາບຂອງຜູ້ຮຽນຈົບ, ສໍາຫຼວດຄໍາຄິດເຫັນຂອງຄູສອນໃນຫຼັກສູດ, ຄວາມພໍໃຈຂອງຜູ້ໃຊ້ແຮງງານ ແລະ ການມີສ່ວນຮ່ວມຂອງສັງຄົມ.

**ມາດຕາ 38 ການອະນຸມັດ ແລະ ຍົກເລີກຫຼັກສູດ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຮອງ, ອະນຸຍາດ, ປະກາດໃຊ້ ຫຼື ຍົກເລີກ ຫຼັກສູດການສຶກສາຊັ້ນສູງທຸກລະດັບ.

**ມາດຕາ 39 ການຮ່ວມມືກັບສະຖາບັນການສຶກສາຊັ້ນສູງຂອງຕ່າງປະເທດກ່ຽວກັບຫຼັກສູດ**

ສະຖາບັນການສຶກສາຊັ້ນສູງ ສາມາດຮ່ວມມືກັບສະຖາບັນການສຶກສາຊັ້ນສູງຂອງຕ່າງປະເທດ ໃນການສ້າງ, ພັດທະນາຫຼັກສູດ ແລະ ຈັດຕັ້ງການຮຽນ-ການສອນ ໂດຍໄດ້ຮັບການຮັບຮອງ ແລະ ອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ.

## ໝວດທີ 2
## ການຈັດຕັ້ງການຮຽນ-ການສອນ

**ມາດຕາ 40 ເງື່ອນໄຂການຈັດຕັ້ງການຮຽນ-ການສອນ**

ສະຖາບັນການສຶກສາຊັ້ນສູງແຕ່ລະປະເພດ ຕ້ອງຈັດຕັ້ງການຮຽນ-ການສອນ ຫຼັກສູດລະດັບຕ່າງໆ ຕາມເງື່ອນໄຂ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

2. ມີບຸກຄະລາກອນ, ຄູສອນ, ນັກຄົ້ນຄວ້າ, ນັກວິທະຍາສາດ ມີລະດັບວິຊາສະເພາະ ແລະ ວຸດທິການສຶກສາທີ່ເໝາະສົມກັບລະດັບຂອງຫຼັກສູດ ທີ່ຈັດຕັ້ງການຮຽນ-ການສອນ ຫຼື ການຄົ້ນຄວ້າວິທະຍາສາດ ເພື່ອຮັບປະກັນໃຫ້ມີຄຸນນະພາບສູງ;

3. ມີໂຄງລ່າງພື້ນຖານ ເປັນຕົ້ນ ອາຄານ, ຫ້ອງຮຽນ, ຫ້ອງທົດລອງ, ຫ້ອງສະໝຸດ, ວັດຖຸປະກອນ, ເຕັກນິກ, ຕໍາລາ ແລະ ເອກະສານ ຮັບໃຊ້ການຮຽນ-ການສອນ ຢ່າງພຽງພໍ ແລະ ເໝາະສົມ;

4. ມີຫຼັກສູດ ການຮຽນ-ການສອນທີ່ຖືກຕ້ອງ ຕາມມາດຕະຖານຫຼັກສູດແຫ່ງຊາດ ແລະ ຮັບປະກັນປະລິມານການຮຽນສໍາລັບການສຶກສາຕໍ່ເນື່ອງໃຫ້ນັກສຶກສາ;

5. ມີເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 41 ການຮັບນັກສຶກສາ**

ການຮັບນັກສຶກສາຂອງສະຖານການສຶກສາຊັ້ນສູງ ໃຫ້ປະຕິບັດ ດັ່ງນີ້:

1. ກໍານົດແຜນຮັບນັກສຶກສາຂອງສະຖານການສຶກສາຊັ້ນສູງ ບົນພື້ນຖານຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍຜ່ານການຮັບຮອງຂອງຂະແໜງການທີ່ກ່ຽວຂ້ອງ ແລະ ການອະນຸຍາດຂອງກະຊວງສຶກສາທິການ ແລະ ກິລາ;

2. ກໍານົດແຜນຮັບນັກສຶກສາ ສໍາລັບແຕ່ລະສົກສຶກສາ ຕາມແຜນພັດທະນາຊັບພະຍາກອນມະນຸດຂອງສູນກາງ, ທ້ອງຖິ່ນ ແລະ ຄວາມສາມາດຮັບຕົວຈິງ;

3. ກໍານົດວິທີການຄັດເລືອກໃນການຮັບນັກສຶກສາ ດ້ວຍຄວາມເປັນທໍາ ແລະ ໂປ່ງໃສ ດ້ວຍການສອບເສັງ, ສໍາພາດ ແລະ ວິທີການອື່ນ ເພື່ອຮັບປະກັນຄຸນນະພາບ ຕາມເງື່ອນໄຂຂອງຜູ້ເຂົ້າຮຽນ ທີ່ກໍານົດໄວ້ໃນຫຼັກສູດການສຶກສາຊັ້ນສູງແຕ່ລະລະດັບ;

4. ກໍານົດກ່ຽວກັບການແຈ້ງໃຫ້ຜູ້ທີ່ຜ່ານການຄັດເລືອກຊາບ ເພື່ອລົງທະບຽນເປັນນັກສຶກສາ ຕາມການກໍານົດເວລາໃນແຕ່ລະສົກສຶກສາ.

ສະຖານການສຶກສາຊັ້ນສູງ ສາມາດຮັບນັກສຶກສາຕ່າງປະເທດ ຕາມລະບຽບການ.

ສໍາລັບການຮັບນັກສຶກສາຂອງ ວິທະຍາຄານ ແລະ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ນັ້ນ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 42 ຮູບແບບການຈັດຕັ້ງການຮຽນ-ການສອນ**

ສະຖານການສຶກສາຊັ້ນສູງ ຈັດຕັ້ງການຮຽນ-ການສອນ ຕາມຮູບແບບ ດັ່ງນີ້:

1. ຮູບແບບເຕັມເວລາ ຊຶ່ງແມ່ນການຈັດຕັ້ງການຮຽນ-ການສອນ ແຕ່ ຫ້າ ຫາ ເຈັດ ຊົ່ວໂມງຕໍ່ວັນ ຫຼື ຊາວຫ້າ ຫາ ສາມສິບຫ້າ ຊົ່ວໂມງ ຕໍ່ອາທິດ;

2. ຮູບແບບບໍ່ເຕັມເວລາ ຊຶ່ງແມ່ນການຈັດຕັ້ງການຮຽນ-ການສອນ ຕໍ່າກວ່າ ຫ້າຊົ່ວໂມງ ຕໍ່ວັນ ຫຼື ຕໍ່າກວ່າ ຊາວຫ້າຊົ່ວໂມງ ຕໍ່ອາທິດ;

3. ຮູບແບບທາງໄກ ຊຶ່ງແມ່ນການຈັດຕັ້ງການຮຽນ-ການສອນ ຜ່ານສື່ປະເພດຕ່າງໆ ໂດຍ ຄູ ແລະ ນັກສຶກສາ ບໍ່ໄດ້ຂຶ້ນຫ້ອງຮຽນໃນເວລາ ແລະ ສະຖານທີ່ດຽວກັນ;

4. ຮູບແບບອື່ນ ທີ່ເຫັນວ່າເໝາະສົມ.

**ມາດຕາ 43 ຕຳລາ ແລະ ເອກະສານການຮຽນ-ການສອນ**

ການຈັດຕຳລາ ແລະ ເອກະສານການຮຽນ-ການສອນຂອງການສຶກສາຊັ້ນສູງ ໃຫ້ປະຕິບັດ ດັ່ງນີ້:

1. ຕຳລາ ແລະ ເອກະສານການຮຽນ-ການສອນ ທີ່ນຳໃຊ້ຢູ່ສະຖານການສຶກສາຊັ້ນສູງ ຕ້ອງມີແຫຼ່ງຂໍ້ມູນທີ່ໃຊ້ອ້າງອີງຢ່າງຖືກຕ້ອງ, ໄດ້ຮັບການກວດແກ້ ແລະ ຮັບຮອງເນື້ອໃນ ໂດຍຫົວໜ້າສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ;

2. ມາດຕະຖານດ້ານປະລິມານຄວາມຮູ້, ຄວາມສາມາດ ທີ່ຮັບໃຊ້ໃຫ້ຫຼັກສູດການຮຽນ-ການສອນຂອງວິຊາຮຽນ, ຮັບໃຊ້ເປົ້າໝາຍຂອງ ຄູ ແລະ ນັກສຶກສາ ແຕ່ລະລະດັບ ຕ້ອງໃຫ້ມີຢ່າງຄົບຖ້ວນ;

3. ສະຖານການສຶກສາຊັ້ນສູງ ທຸກປະເພດ ຕ້ອງມີຫ້ອງສະໝຸດເປັນຂອງຕົນເອງ ທີ່ມີ ປຶ້ມ, ຕຳລາ ແລະ ເອກະສານທາງວິທະຍາສາດ, ວິຊາການ ຄົບຖ້ວນໃນຂັ້ນພື້ນຖານ ຫຼື ມີຫ້ອງສະໝຸດເອເລັກໂຕຣນິກ ເພື່ອການສຶກສາທົ່ວໄປ ແລະ ຮັບໃຊ້ການຄົ້ນຄວ້າວິທະຍາສາດຂອງຄູ ແລະ ນັກສຶກສາ;

4. ການນຳໃຊ້ຕຳລາ ແລະ ເອກະສານການຮຽນ-ການສອນ ທີ່ເປັນຜົນງານໃນການຄົ້ນຄວ້າ, ຮຽບຮຽງ ຫຼື ຂຽນເອງຂອງ ພະນັກງານ, ຄູ, ນັກຄົ້ນຄວ້າ ແລະ ນັກວິທະຍາສາດ ຕ້ອງຜ່ານການອະນຸຍາດ ໂດຍຫົວໜ້າສະຖານການສຶກສາຊັ້ນສູງ ຕາມການສະເໜີຂອງຄະນະວິຊາ ຫຼື ນັກຄົ້ນຄວ້າ ຫຼື ນັກວິທະຍາສາດທີ່ກ່ຽວຂ້ອງ ແລະ ໄດ້ຮັບການຮັບຮອງຈາກຄະນະກຳມະການກວດແກ້ ທີ່ໄດ້ຮັບການແຕ່ງຕັ້ງໂດຍຫົວໜ້າສະຖານການສຶກສາຊັ້ນສູງ.

ສະຖານການສຶກສາຊັ້ນສູງ ເປັນເຈົ້າຂອງລິຂະສິດຕຳລາ ແລະ ເອກະສານການຮຽນ-ການສອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ລະບຽບການຂອງສະຖານການສຶກສາຊັ້ນສູງ.

**ມາດຕາ 44 ພາສາທີ່ນຳໃຊ້ໃນການຮຽນ-ການສອນ**

ພາສາທີ່ນຳໃຊ້ໃນການຮຽນ-ການສອນຢູ່ສະຖານການສຶກສາຊັ້ນສູງ ແມ່ນ ພາສາລາວ. ສ່ວນການຮຽນ-ການສອນເປັນພາສາຕ່າງປະເທດ ສາມາດນຳໃຊ້ໃນສາຂາວິຊາພາສາຕ່າງປະເທດ, ນຳໃຊ້ເພື່ອສອນບາງວິຊາ, ຫຼັກສູດສາກົນ ຫຼື ຫຼັກສູດຮ່ວມມືກັບສະຖານການສຶກສາຊັ້ນສູງຂອງຕ່າງປະເທດ ແລະ ສາມາດນຳໃຊ້ສຳລັບໂຄງການຄົ້ນຄວ້າວິທະຍາສາດ ຕາມການອະນຸຍາດຂອງກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 45 ການຄຸ້ມຄອງການຮຽນ-ການສອນ**

ການຄຸ້ມຄອງການຮຽນ-ການສອນຂອງສະຖານການສຶກສາຊັ້ນສູງ ໃຫ້ປະຕິບັດ ດັ່ງນີ້:

1. ຄຸ້ມຄອງຕາມແຜນການການຮຽນ-ການສອນຂອງແຕ່ລະສົກສຶກສາ;
2. ຄຸ້ມຄອງຕາມການປະຕິບັດຊົ່ວໂມງສອນ ຂອງຫຼັກສູດຕໍ່ສົກສຶກສາ ຫຼື ຕາມລະບົບໜ່ວຍກິດ;
3. ມີການປະກັນຄຸນນະພາບ, ການກວດກາ ແລະ ປະເມີນຜົນການຮຽນ-ການສອນ;
4. ຄຸ້ມຄອງ ຄູ ແລະ ນັກສຶກສາ ຂອງສະຖານການສຶກສາຊັ້ນສູງ ຕາມລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 3
## ການວັດ ແລະ ປະເມີນຜົນການຮຽນ-ການສອນ

**ມາດຕາ 46 ການວັດ ແລະ ປະເມີນຜົນການຮຽນ-ການສອນ**

ການວັດ ແລະ ປະເມີນຜົນການຮຽນ ແມ່ນ ການຕີລາຄາຜົນສໍາເລັດທາງການຮຽນຮູ້ຂອງນັກສຶກສາຢູ່ສະຖານການສຶກສາຊັ້ນສູງ ດ້ວຍວິທີການສອບເສັງ, ການຂຽນ ບົດລາຍງານໂຄງການຈົບຊັ້ນ ຫຼື ວິທະຍານິພົນ ຕາມທີ່ກໍານົດໄວ້ໃນຫຼັກສູດການສຶກສາຊັ້ນສູງ.

ໃນການວັດ ແລະ ປະເມີນຜົນການຮຽນ ໃຫ້ນໍາໃຊ້ລະດັບຄະແນນເປັນຫົວໜ່ວຍວັດແທກປະລິມານຄວາມຮູ້ ແລະ ນໍາໃຊ້ຄ່າລະດັບ ຕາມທີ່ໄດ້ກໍານົດໄວ້ໃນມາດຕະຖານຫຼັກສູດແຫ່ງຊາດ.

ການວັດ ແລະ ປະເມີນຜົນການສອນ ແມ່ນ ການຕີລາຄາຄຸນນະພາບການສອນຂອງຄູຢູ່ສະຖານການສຶກສາຊັ້ນສູງ ດ້ວຍວິທີການ ໃຫ້ຄະແນນ, ຕອບແບບສອບຖາມ ຫຼື ການປະກອບຄໍາເຫັນຂອງ ນັກສຶກສາ, ຄູດ້ວຍກັນ ແລະ ໜ່ວຍງານທີ່ຮັບຜິດຊອບການປະກັນຄຸນນະພາບການສຶກສາ.

**ມາດຕາ 47 ການສອບເສັງ**

ການສອບເສັງ ແມ່ນ ການວັດ ແລະ ປະເມີນຜົນຄວາມຮູ້, ຄວາມເຂົ້າໃຈຂອງນັກສຶກສາຕໍ່ກັບລາຍວິຊາທີ່ໄດ້ສຶກສອນໃນຫຼັກສູດ ດ້ວຍຮູບແບບ ການຂຽນ ຫຼື ໝາຍຄໍາຕອບ, ການຂຽນບົດລາຍງານ, ການສະເໜີ ແລະ ການປະຕິບັດຕົວຈິງ.

ການສອບເສັງ ໃຫ້ປະຕິບັດເປັນປົກກະຕິ ພາຍຫຼັງຈົບວິຊາຮຽນ, ຈົບພາກຮຽນ ຫຼື ຈົບຫຼັກສູດ.

**ມາດຕາ 48 ການຂຽນບົດລາຍງານໂຄງການຈົບຊັ້ນ ແລະ ວິທະຍານິພົນ**

ການຂຽນບົດລາຍງານໂຄງການຈົບຊັ້ນ ແມ່ນ ການສັງລວມຄວາມຮູ້ທາງດ້ານວິຊາສະເພາະ, ທິດສະດີ ແລະ ພາກປະຕິບັດຕົວຈິງ ກ່ຽວກັບຫົວຂໍ້ວິຊາການໃດໜຶ່ງ ສໍາລັບການສຶກສາລະດັບ ອະນຸປະລິນຍາ ແລະ ປະລິນຍາຕີ.

ການຂຽນວິທະຍານິພົນ ແມ່ນ ການສັງລວມຄວາມຮູ້, ຂໍ້ມູນ, ການຄົ້ນຄວ້າວິທະຍາສາດທາງດ້ານວິຊາສະເພາະ, ທິດສະດີ ແລະ ພາກປະຕິບັດຕົວຈິງ ກ່ຽວກັບຫົວຂໍ້ວິຊາການໃດໜຶ່ງ ສໍາລັບການສຶກສາລະດັບ ປະລິນຍາໂທ ແລະ ປະລິນຍາເອກ.

ລາຍລະອຽດ ກ່ຽວກັບການຂຽນບົດລາຍງານໂຄງການຈົບຊັ້ນ ແລະ ວິທະຍານິພົນ ໄດ້ກໍານົດໄວ້ໃນມາດຕະຖານຫຼັກສູດແຫ່ງຊາດ ແລະ ລະບຽບການຂອງສະຖານການສຶກສາຊັ້ນສູງ.

## ໝວດທີ 4
## ການອອກປະກາສະນີຍະບັດ

**ມາດຕາ 49 ການອອກປະກາສະນີຍະບັດ**

ສະຖາບັນການສຶກສາຊັ້ນສູງ ເປັນຜູ້ອອກປະກາສະນີຍະບັດ ໃຫ້ແກ່ຜູ້ສໍາເລັດການສຶກສາ ຕາມລະດັບຫຼັກສູດທີ່ໄດ້ຮັບອະນຸຍາດຈາກກະຊວງສຶກສາທິການ ແລະ ກິລາ.

ສະຖາບັນການສຶກສາຊັ້ນສູງ ທຸກປະເພດ ຕ້ອງສົ່ງບັນຊີລາຍຊື່ຜູ້ສໍາເລັດການສຶກສາ ໃນແຕ່ລະສົກສຶກສາ ໃຫ້ກະຊວງສຶກສາທິການ ແລະ ກິລາ ເພື່ອສັງລວມຂໍ້ມູນຜູ້ສໍາເລັດຫຼັກສູດການສຶກສາຊັ້ນສູງລະດັບຕ່າງໆ ຍົກເວັ້ນສະຖາບັນການສຶກສາຊັ້ນສູງ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.

ຮູບແບບ, ການຈັດພິມ ແລະ ການມອບ-ຮັບປະກາສະນີຍະບັດການສຶກສາຊັ້ນສູງ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 50 ປະກາສະນີຍະບັດປະລິນຍາເອກກິດຕິມະສັກ**

ປະກາສະນີຍະບັດປະລິນຍາເອກກິດຕິມະສັກ (Honorary Doctor) ແມ່ນ ປະກາສະນີຍະບັດ ທີ່ມອບເປັນກຽດໃຫ້ແກ່ບຸກຄົນໃດໜຶ່ງ ທີ່ມີຜົນງານດີເດັ່ນໃນຂົງເຂດວຽກງານໃດໜຶ່ງ ຊຶ່ງບໍ່ແມ່ນວຸດທິການສຶກສາຊັ້ນສູງ, ບໍ່ມີສິດນໍາໃຊ້ຊື່ຫຍໍ້ ປອ. ຂຽນນໍາໜ້າຊື່ຂອງຕົນເອງ ແລະ ບໍ່ມີຜົນຕໍ່ການປະຕິບັດນະໂຍບາຍເງິນເດືອນ.

ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ ທຽບເທົ່າມະຫາວິທະຍາໄລ ສາມາດອອກປະກາສະນີຍະບັດປະລິນຍາເອກກິດຕິມະສັກໃຫ້ບຸກຄົນພາຍນອກ ຕາມເງື່ອນໄຂທີ່ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງກໍານົດ ໂດຍຜ່ານການຮັບຮອງຈາກສະພາສະຖາບັນການສຶກສາຊັ້ນສູງຂອງຕົນ ແລະ ການເຫັນດີຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

# ພາກທີ VI
# ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການບໍລິການວິຊາການ
## ໝວດທີ 1
## ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ

**ມາດຕາ 51 ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ຢູ່ສະຖາບັນການສຶກສາຊັ້ນສູງ ມີ ດັ່ງນີ້:

1. ຄົ້ນຄວ້າວິທະຍາສາດພື້ນຖານ ທໍາມະຊາດ, ສັງຄົມ, ວິທະຍາສາດນໍາໃຊ້ ແລະ ການຖ່າຍທອດເຕັກໂນໂລຊີ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ເຊັ່ນ ອຸດສາຫະກໍາ, ກະສິກໍາ ແລະ ປ່າໄມ້, ສິ່ງແວດລ້ອມ, ການບໍລິການ, ເສດຖະກິດ, ການເມືອງ ແລະ ການປົກຄອງ, ການສຶກສາ, ການກິລາ, ສາທາລະນະສຸກ, ການປ້ອງກັນຊາດ ແລະ ການປ້ອງກັນຄວາມສະຫງົບ;

2. ຄົ້ນຄວ້າ ເພື່ອສົ່ງເສີມພູມປັນຍາຂອງພົນລະເມືອງລາວ ໃຫ້ກາຍເປັນຊັບສິນທາງປັນຍາຂອງຊາດ, ທ້ອງຖິ່ນ, ຊຸມຊົນ ແລະ ບຸກຄົນ.

**ມາດຕາ 52 ຈຸດໝາຍການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ຢູ່ສະຖານການສຶກສາຊັ້ນສູງ ມີຈຸດໝາຍ ດັ່ງນີ້:

1. ສົ່ງເສີມໃຫ້ມີການຈັດຕັ້ງການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ເພື່ອຍົກສູງຄວາມຮູ້, ຄວາມສາມາດໃນການຄົ້ນຄວ້າວິທະຍາສາດ ຂອງຄູ ແລະ ນັກສຶກສາ;

2. ສົ່ງເສີມຫົວຄິດປະດິດສ້າງຂອງຄູ ແລະ ນັກສຶກສາ ເພື່ອປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

**ມາດຕາ 53 ຄວາມຮັບຜິດຊອບຂອງສະຖານການສຶກສາຊັ້ນສູງຕໍ່ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ສະຖານການສຶກສາຊັ້ນສູງ ມີຄວາມຮັບຜິດຊອບຕໍ່ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ດັ່ງນີ້:

1. ສ້າງຍຸດທະສາດການຄົ້ນຄວ້າວິທະຍາສາດ, ໂຄງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີໄລຍະສັ້ນ, ໄລຍະຍາວ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ເປັນເຈົ້າການຈັດຕັ້ງ ແລະ ດໍາເນີນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ພ້ອມທັງເຜີຍແຜ່ຜົນສໍາເລັດ ໃນການຄົ້ນຄວ້າດັ່ງກ່າວ ຕາມພາລະບົດບາດ, ຂອບເຂດຄວາມຮັບຜິດຊອບ ແລະ ສິດຂອງຕົນ;

3. ສ້າງ ແລະ ຂະຫຍາຍສະຖານທີ່ການຄົ້ນຄວ້າວິທະຍາສາດໃຫ້ມີຄວາມພ້ອມ ເຊັ່ນ ຫ້ອງທົດລອງ, ສູນທົດລອງ, ຫ້ອງສະໝຸດ, ອຸປະກອນເຕັກນິກ ແລະ ສິ່ງອໍານວຍຄວາມສະດວກອື່ນ;

4. ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການຄົ້ນຄວ້າ ແລະ ຄັດເລືອກຫົວຂໍ້ຄົ້ນຄວ້າວິທະຍາສາດ, ໃຫ້ຄໍາປຶກສາ, ປະຕິບັດສັນຍາການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຈັດຕັ້ງດໍາເນີນການຄົ້ນຄວ້າຕາມຫົວຂໍ້ວິທະຍາສາດ ຕາມຄວາມຕ້ອງການຈໍາເປັນ ແລະ ເປັນບຸລິມະສິດ;

5. ຮັບປະກັນ ແລະ ປົກປ້ອງ, ຄຸ້ມຄອງຊັບສິນທາງປັນຍາ, ຜົນປະໂຫຍດທາງວິທະຍາສາດ ແລະ ເຕັກໂນໂລຊີຂອງສະຖານການສຶກສາຊັ້ນສູງ.

**ມາດຕາ 54 ຄວາມຮັບຜິດຊອບຂອງລັດຕໍ່ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ລັດຖະບານກໍານົດຍຸດທະສາດລວມ ແລະ ແຜນການລົງທຶນ ໃນແຕ່ລະໄລຍະ ເພື່ອການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີຂອງສະຖານການສຶກສາຊັ້ນສູງ.

ກະຊວງສຶກສາທິການ ແລະ ກິລາ ສົມທົບກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຂະແໜງການທີ່ກ່ຽວຂ້ອງ ສ້າງລະບຽບການ ແລະ ແຜນການທີ່ເປັນບຸລິມະສິດໃນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີຂອງສະຖານການສຶກສາຊັ້ນສູງ.

**ມາດຕາ 55 ແຫຼ່ງທຶນໃນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ແຫຼ່ງທຶນໃນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ຂອງສະຖານການສຶກສາຊັ້ນສູງ ໄດ້ມາຈາກງົບປະມານແຫ່ງລັດ ຕາມບຸລິມະສິດລະດັບຊາດ ແລະ ລະດັບສະຖານການສຶກສາ, ກອງທຶນ, ໂຄງການ, ການສະໜັບສະໜູນຈາກການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ, ການບໍລິຈາກຂອງບຸກຄົນ ຫຼື ລວມໝູ່ ແລະ ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 56 ການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

ສະຖານການສຶກສາຊັ້ນສູງ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ຕາມພາລະບົດບາດ, ຂອບເຂດຄວາມຮັບຜິດຊອບ ແລະ ສິດຂອງຕົນ ດ້ວຍການສ້າງກົນໄກການຈັດຕັ້ງ ແລະ ລະບຽບການ ໃນການຕິດຕາມ, ກວດກາ ແລະ ປະເມີນຜົນທີ່ມີປະສິດທິຜົນ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການບໍລິການວິຊາການ

**ມາດຕາ 57 ການບໍລິການວິຊາການ**

ການບໍລິການວິຊາການ ແມ່ນ ການໃຫ້ບໍລິການແກ່ສັງຄົມ ໃນດ້ານຄວາມຮູ້ທາງວິຊາການ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ສະຕິປັນຍາ, ຄວາມຊ່ຽວຊານ, ອຸປະກອນ ແລະ ເຄື່ອງທົດລອງຂອງສະຖານການສຶກສາຊັ້ນສູງ.

ສະຖານການສຶກສາຊັ້ນສູງ ມີໜ້າທີ່ໃຫ້ການບໍລິການວິຊາການແກ່ສັງຄົມ ດ້ວຍຮູບການ ແລະ ວິທີການຕ່າງໆ ຕາມພາລະບົດບາດຂອງຕົນ, ມີສິດໄດ້ຮັບຄ່າຕອບແທນຈາກການບໍລິການວິຊາການ ແລະ ຄຸ້ມຄອງ, ນຳໃຊ້ລາຍຮັບວິຊາການ ຕາມກົດໝາຍ.

**ມາດຕາ 58 ການຄຸ້ມຄອງການບໍລິການວິຊາການ**

ການຄຸ້ມຄອງການບໍລິການວິຊາການ ຂອງສະຖານການສຶກສາຊັ້ນສູງ ໃຫ້ປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງ.

# ພາກທີ VII
# ການປະກັນຄຸນນະພາບການສຶກສາຊັ້ນສູງ

**ມາດຕາ 59 ການປະກັນຄຸນນະພາບການສຶກສາຊັ້ນສູງ**

ການປະກັນຄຸນນະພາບການສຶກສາຊັ້ນສູງ ແມ່ນ ການກຳນົດມາດຕະຖານ, ການຕິດຕາມ, ກວດກາ, ປະເມີນຜົນ ແລະ ກວດສອບ ຄຸນນະພາບການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ ດ້ວຍການຈັດຕັ້ງກົນໄກ

ປະກັນຄຸນນະພາບພາຍໃນ ແລະ ພາຍນອກ ໂດຍມີຈຸດປະສົງຮັບຮອງ ແລະ ຢັ້ງຢືນຜົນຂອງການສຶກສາ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງ, ດຶງດູດຄວາມສົນໃຈຕໍ່ການຮຽນ ເຮັດໃຫ້ຜົນຂອງການສຶກສາຊັ້ນສູງ ມີມາດຕະຖານທຽບເທົ່າມາດຕະຖານ ພາກພື້ນ ແລະ ສາກົນ.

**ມາດຕາ 60 ຈຸດປະສົງຂອງການປະກັນຄຸນນະພາບການສຶກສາຊັ້ນສູງ**

ການປະກັນຄຸນນະພາບການສຶກສາຊັ້ນສູງ ມີຈຸດປະສົງ ດັ່ງນີ້:

1. ເພື່ອຮັບປະກັນ ແລະ ຍົກສູງຄຸນນະພາບການສຶກສາຊັ້ນສູງ;
2. ເພື່ອຮັບຮູ້ລະດັບການບັນລຸ ຈຸດປະສົງຂອງສະຖານການສຶກສາ ແລະ ຫຼັກສູດ ໃນແຕ່ລະໄລຍະ;
3. ເພື່ອເປັນບ່ອນອີງໃຫ້ແກ່ສະຖານການສຶກສາຊັ້ນສູງ ໃນການຊີ້ແຈງໃຫ້ແກ່ຜູ້ປະກອບການ, ໜ່ວຍງານຕົ້ນສັງກັດ, ພາກສ່ວນກ່ຽວຂ້ອງ ແລະ ສັງຄົມ ກ່ຽວກັບຄຸນນະພາບຂອງສະຖານການສຶກສາ;
4. ເພື່ອເປັນພື້ນຖານໃຫ້ແກ່ຜູ້ຮຽນໃນການຕັດສິນໃຈເລືອກສະຖານການສຶກສາຊັ້ນສູງ ແລະ ຫຼັກສູດຈະເຂົ້າຮຽນ ແລະ ສ້າງຄວາມເຊື່ອຖືໃຫ້ແກ່ສັງຄົມ ແລະ ຊຸມຊົນ.

**ມາດຕາ 61 ຫຼັກການຂອງການປະກັນຄຸນນະພາບການສຶກສາຊັ້ນສູງ**

ການປະກັນຄຸນນະພາບການສຶກສາຊັ້ນສູງ ມີຫຼັກການ ດັ່ງນີ້:

1. ຖືເອົາຄຸນນະພາບຂອງຜູ້ຮຽນ ເປັນບຸລິມະສິດຕົ້ນຕໍ;
2. ຮັບປະກັນລັກສະນະພາວະວິໄສ, ຖືເອົາຂໍ້ມູນ ເປັນບ່ອນອີງພື້ນຖານຂອງທຸກວຽກງານ;
3. ມີຄວາມຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;
4. ເປັນວຽກງານພາກບັງຄັບ, ເຄື່ອນໄຫວປົກກະຕິ, ຕໍ່ເນື່ອງ ແລະ ເປັນຮອບວຽນ;
5. ມີຄວາມເປັນເອກະລາດດ້ານວິຊາການ;
6. ຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງມີສ່ວນຮ່ວມ ໃນຂະບວນການປະກັນຄຸນນະພາບ.

**ມາດຕາ 62 ເປົ້າໝາຍການປະກັນຄຸນນະພາບການສຶກສາຊັ້ນສູງ**

ການປະກັນຄຸນນະພາບການສຶກສາຊັ້ນສູງ ມີ ສອງເປົ້າໝາຍ ດັ່ງນີ້:

1. ສະຖານການສຶກສາ;
2. ຫຼັກສູດການສຶກສາ.

**ມາດຕາ 63 ກົນໄກການປະກັນຄຸນນະພາບການສຶກສາຊັ້ນສູງ**

ກົນໄກການປະກັນຄຸນນະພາບການສຶກສາຊັ້ນສູງ ແມ່ນ ຂັ້ນຕອນການດຳເນີນງານ ທີ່ພົວພັນ ແລະ ເຊື່ອມໂຍງກັນຢ່າງເປັນລະບົບ ເປັນຕົ້ນ ການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ, ການທົບທວນ ໂດຍນຳໃຊ້ບຸກຄະລາກອນ, ຊັບພະຍາກອນ, ຫຼັກເກນ, ມາດຕະການ, ທິດທາງປະຕິບັດ ເພື່ອບັນລຸເປົ້າໝາຍ.

ກົນໄກການປະກັນຄຸນນະພາບການສຶກສາຊັ້ນສູງ ປະກອບດ້ວຍ:

1. ການປະກັນຄຸນນະພາບພາຍໃນ ຊຶ່ງແມ່ນການຕິດຕາມ, ກວດກາ ແລະ ປະເມີນຜົນຄຸນນະພາບ ຕາມມາດຕະຖານຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍແມ່ນສະຖານການສຶກສາຊັ້ນສູງເອງເປັນຜູ້ປະເມີນ;

2. ການປະກັນຄຸນນະພາບພາຍນອກ ຊຶ່ງແມ່ນການຕິດຕາມ, ກວດກາ, ປະເມີນຜົນ ແລະ ກວດສອບຄຸນນະພາບ ຕາມມາດຕະຖານຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງສຶກສາທິການ ແລະ ກິລາ ຫຼື ຂອງສາກົນ ໂດຍແມ່ນອົງການປະກັນຄຸນນະພາບພາຍນອກເປັນຜູ້ປະເມີນ.

**ມາດຕາ 64 ມາດຕະການການປະກັນຄຸນນະພາບພາຍໃນ**

ສະຖານການສຶກສາຊັ້ນສູງ ຕ້ອງມີໜ່ວຍງານ ແລະ ກົນໄກການປະກັນຄຸນນະພາບ ພາຍໃນຂອງຕົນເອງ ຊຶ່ງເປັນການຈັດຕັ້ງທີ່ມີຄວາມເປັນເອກະລາດທາງດ້ານວິຊາການ ຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຄະນະຜູ້ບໍລິຫານສະຖານການສຶກສາຊັ້ນສູງນັ້ນ ເພື່ອຮັບຜິດຊອບການປະກັນຄຸນນະພາບພາຍໃນສະຖານການສຶກສາ.

ສະຖານການສຶກສາຊັ້ນສູງ ຕ້ອງປະຕິບັດ ຕາມເງື່ອນໄຂ ແລະ ມາດຕະຖານການປະກັນຄຸນນະພາບ ການສຶກສາຊັ້ນສູງ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

**ມາດຕາ 65 ມາດຕະການການປະກັນຄຸນນະພາບພາຍນອກ**

ສະຖານການສຶກສາ ແລະ ຫຼັກສູດການສຶກສາຊັ້ນສູງ ຕ້ອງຮັບການປະເມີນພາຍນອກ ຢ່າງໜ້ອຍ ຫ້າປີ ຕໍ່ຄັ້ງ ເພື່ອຮັບຮອງຄຸນນະພາບ.

ສະຖານການສຶກສາ ແລະ ຫຼັກສູດການສຶກສາ ຊັ້ນສູງ ທີ່ບໍ່ຜ່ານການຮັບຮອງຄຸນນະພາບ ຕ້ອງລາຍງານຄວາມຄືບໜ້າຂອງການປັບປຸງຄຸນນະພາບ ໃຫ້ກະຊວງສຶກສາທິການ ແລະ ກິລາ ຢ່າງໜ້ອຍ ປີລະຄັ້ງ.

ສະຖານການສຶກສາຊັ້ນສູງ ທີ່ຜ່ານການຮັບຮອງຄຸນນະພາບ ສາມາດສະເໜີ ແລະ ດຳເນີນການປະເມີນພາຍນອກ ແລະ ຮັບຮອງຄຸນນະພາບໃນລະດັບຫຼັກສູດການສຶກສາ.

ຫຼັກສູດການສຶກສາຊັ້ນສູງ ທີ່ບໍ່ໄດ້ຮັບການປະເມີນພາຍນອກ ຕາມໄລຍະເວລາທີ່ກຳນົດ ຫຼື ຜົນການປະເມີນພາຍນອກ ບໍ່ຜ່ານເກນທີ່ກຳນົດ ຕ້ອງປັບປຸງຄຸນນະພາບການສຶກສາຂອງຕົນຢ່າງຮີບດ່ວນ. ພາຍໃນເວລາ ສອງປີ ຖ້າບໍ່ມີຄວາມຄືບໜ້າໃນການປັບປຸງຄຸນນະພາບ ແມ່ນ ໃຫ້ໂຈະການຮັບນັກສຶກສາ ເພື່ອເປັນມາດຕະການຮັບປະກັນຜົນປະໂຫຍດຂອງຜູ້ຮຽນ.

**ມາດຕາ 66 ຄວາມຮັບຜິດຊອບຂອງສະຖານການສຶກສາຊັ້ນສູງ ກ່ຽວກັບການປະກັນຄຸນນະພາບການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ມີຄວາມຮັບຜິດຊອບກ່ຽວກັບການປະກັນຄຸນນະພາບ ດັ່ງນີ້:

1. ສ້າງລະບົບການປະກັນຄຸນນະພາບພາຍໃນ, ດຳເນີນການກວດສອບ ແລະ ປະເມີນຄຸນນະພາບຕົນເອງ ຕາມມາດຕະຖານທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້;

2. ສ້າງເອກະສານຂໍ້ມູນ ແລະ ບົດລາຍງານ ການປະກັນຄຸນນະພາບ ເພື່ອລາຍງານຕໍ່ອົງການຈັດຕັ້ງຂອງລັດໃນຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີ;

3. ຮັບຜິດຊອບ ແລະ ຍອມຮັບການກວດສອບ ແລະ ການປະເມີນຕີລາຄາ ຂອງອົງການປະກັນຄຸນນະພາບພາຍນອກ ຕໍ່ສະຖານການສຶກສາຊັ້ນສູງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

4. ວາງແຜນ, ກຳນົດໄລຍະເວລາ ແລະ ງົບປະມານ ເພື່ອດຳເນີນຂັ້ນຕອນການປະກັນຄຸນນະພາບພາຍໃນສະຖານສຶກສາຊັ້ນສູງ;

5. ເຜີຍແຜ່ ແລະ ເປີດເຜີຍ ຂໍ້ມູນກ່ຽວກັບຜົນການກວດສອບ ແລະ ການປະເມີນການປະກັນຄຸນນະພາບ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ຕໍ່ສັງຄົມ ໂດຍຜ່ານສື່ປະເພດຕ່າງໆ;

6. ນຳໃຊ້ ແລະ ຜັນຂະຫຍາຍ ຜົນຂອງການປະເມີນຕີລາຄາການປະກັນຄຸນນະພາບ;

7. ຮ້ອງຟ້ອງ ຫຼື ດຳເນີນການໃດໜຶ່ງ ຕໍ່ການຈັດຕັ້ງລັດ, ບຸກຄົນ ຫຼື ລວມໝູ່ ທີ່ໃສ່ຮ້າຍປ້າຍສີ ຫຼື ວິພາກວິຈານ, ບິດເບືອນຄວາມຈິງ ກ່ຽວກັບການປະກັນຄຸນນະພາບ ໃນສະຖານການສຶກສາຊັ້ນສູງຂອງຕົນ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VIII
# ບຸກຄະລາກອນ, ຄູ ແລະ ນັກສຶກສາ ຢູ່ສະຖານການສຶກສາຊັ້ນສູງ
## ໝວດທີ 1
## ບຸກຄະລາກອນ ແລະ ຄູ ຢູ່ສະຖານການສຶກສາຊັ້ນສູງ

**ມາດຕາ 67 ບຸກຄະລາກອນຢູ່ສະຖານການສຶກສາຊັ້ນສູງ**

ບຸກຄະລາກອນຢູ່ສະຖານການສຶກສາຊັ້ນສູງ ແມ່ນ ຜູ້ປະຕິບັດໜ້າທີ່ ຄຸ້ມຄອງ, ບໍລິຫານ, ຕິດຕາມ, ກວດກາ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະຖານການສຶກສາຊັ້ນສູງ.

**ມາດຕາ 68 ມາດຕະຖານຂອງບຸກຄະລາກອນຢູ່ສະຖານການສຶກສາຊັ້ນສູງ**

ບຸກຄະລາກອນທີ່ມີຕຳແໜ່ງບໍລິຫານ ຢູ່ສະຖານການສຶກສາຊັ້ນສູງ ມີມາດຕະຖານຕົ້ນຕໍ ດັ່ງນີ້:

1. ມີທັດສະນະການເມືອງຖືກຕ້ອງ, ມີຄຸນສົມບັດສິນທຳປະຕິວັດ ແລະ ຮັບໃຊ້ປະຊາຊົນ;
2. ມີຄວາມຮູ້, ຄວາມສາມາດ, ມີວິຊາສະເພາະໃດໜຶ່ງ ທີ່ແນ່ນອນສົມຄູ່ກັບຕຳແໜ່ງງານ;
3. ຮູ້ພາສາຕ່າງປະເທດໃດໜຶ່ງ ທີ່ຈຳເປັນໃນລະດັບດີ;
4. ມີສຸຂະພາບດີ.

ຜູ້ດຳລົງຕຳແໜ່ງຜູ້ອຳນວຍການ ວິທະຍາໄລ, ສະຖາບັນ ແລະ ວິທະຍາຄານ ນອກຈາກມີມາດຕະຖານຂອງພະນັກງານນຳພາຄຸ້ມຄອງແລ້ວ ຍັງຕ້ອງມີວຸດທິການສຶກສາລະດັບປະລິນຍາໂທ ຫຼື ທຽບເທົ່າ ຂຶ້ນໄປ ແລະ ມີປະສົບການໃນການບໍລິຫານຄຸ້ມຄອງ ຫ້າປີ ຂຶ້ນໄປ.

ຜູ້ດຳລົງຕຳແໜ່ງອະທິການບໍດີມະຫາວິທະຍາໄລ ນອກຈາກມີມາດຕະຖານຂອງພະນັກງານນຳພາຄຸ້ມຄອງແລ້ວ ຍັງຕ້ອງມີວຸດທິການສຶກສາລະດັບປະລິນຍາເອກ ຫຼື ທຽບເທົ່າ ແລະ ມີປະສົບການໃນການບໍລິຫານຄຸ້ມຄອງ ຫ້າປີ ຂຶ້ນໄປ.

**ມາດຕາ 69 ຄູຢູ່ສະຖານການສຶກສາຊັ້ນສູງ**

ຄູຢູ່ສະຖານການສຶກສາຊັ້ນສູງ ແມ່ນ ຜູ້ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ, ຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ, ໃຫ້ການບໍລິການວິຊາການແກ່ສັງຄົມ ແລະ ຊຸມຊົນ ຕາມສາຂາວິຊາ, ຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫຼືອນັກສຶກສາ ດ້ວຍວິທີການສິດສອນຮູບແບບຕ່າງໆ ຢູ່ຕາມສະຖານການສຶກສາຊັ້ນສູງ.

ມາດຕະຖານ, ເງື່ອນໄຂ ແລະ ຈັນຍາບັນຂອງຄູ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 70 ປະເພດຄູຢູ່ສະຖານການສຶກສາຊັ້ນສູງ**

ຄູຢູ່ສະຖານການສຶກສາຊັ້ນສູງ ມີ ສອງປະເພດ ຄື ຄູປະຈຳ ແລະ ຄູບໍ່ປະຈຳ.

ຄູປະຈຳ ແມ່ນ ຄູທີ່ປະຕິບັດໜ້າທີ່ສິດສອນປະຈຳ ຢູ່ສະຖານການສຶກສາຊັ້ນສູງ ທີ່ສິດສອນວິຊາໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຫຼັກສູດ ພ້ອມທັງຮັບຜິດຊອບການຝຶກອົບຮົມ, ເປັນທີ່ປຶກສາໃຫ້ແກ່ນັກສຶກສາ, ນັກຄົ້ນຄວ້າ, ຄົ້ນຄວ້າວິທະຍາສາດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະຖານການສຶກສາຊັ້ນສູງ.

ຄູບໍ່ປະຈຳ ແມ່ນ ບຸກຄົນທີ່ບໍ່ໄດ້ສັງກັດຢູ່ສະຖານການສຶກສາຊັ້ນສູງ ແຕ່ຖືກເຊີນຈາກພາຍນອກມາສິດສອນ, ຖ່າຍທອດຄວາມຮູ້ໃຫ້ນັກສຶກສາ ແລະ ນັກຄົ້ນຄວ້າເປັນບາງຄັ້ງ ຫຼື ບາງໄລຍະ ດ້ວຍວິທີການສິດສອນໃນຮູບແບບ ຕາມທີ່ໄດ້ກຳນົດໄວ້ໃນຫຼັກສູດ.

**ມາດຕາ 71 ນາມມະຍົດ ແລະ ຕຳແໜ່ງວິຊາການ ຂອງຄູຢູ່ສະຖານການສຶກສາຊັ້ນສູງ**

ຄູຢູ່ສະຖານການສຶກສາຊັ້ນສູງ ມີ ນາມມະຍົດ ແລະ ຕຳແໜ່ງວິຊາການ ດັ່ງນີ້:

1. ນາມມະຍົດ ມີ ຄູແຫ່ງຊາດ ແລະ ຄູປະຊາຊົນ;
2. ຕຳແໜ່ງວິຊາການ ມີ ສາດສະດາຈານ, ຮອງສາດສະດາຈານ, ອາຈານ ແລະ ຜູ້ຊ່ວຍອາຈານ.

ໃນກໍລະນີຈຳເປັນນາມມະຍົດ ແລະ ຕຳແໜ່ງວິຊາການຄູ ອາດຈະມີການເພີ່ມເຕີມ ຫຼື ການປັບປຸງ ຕາມການຕົກລົງຂອງລັດຖະບານ.

ສຳລັບເງື່ອນໄຂ, ມາດຕະຖານ, ການຮັບຮອງ ແລະ ການແຕ່ງຕັ້ງນາມມະຍົດ ແລະ ຕຳແໜ່ງວິຊາການ ຂອງຄູຢູ່ສະຖານການສຶກສາຊັ້ນສູງນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 72 ສິດ, ໜ້າທີ່ ແລະ ພັນທະຂອງຄູຢູ່ສະຖານການສຶກສາຊັ້ນສູງ**

ຄູຢູ່ສະຖານການສຶກສາຊັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ພັດທະນາບົດສອນຂອງຕົນ ໃຫ້ສອດຄ່ອງກັບຫຼັກສູດ ແລະ ສະພາບການປ່ຽນແປງດ້ານຕ່າງໆ ໃນແຕ່ລະໄລຍະ;
2. ສິດສອນຕາມຫຼັກສູດທີ່ກຳນົດໄວ້;

3. ຕິດຕາມ, ກວດກາ, ວັດ ແລະ ປະເມີນຜົນ ກ່ຽວກັບການຮຽນ-ການສອນ ຢ່າງເປັນປະຈຳ ຕາມລະບຽບການ;

4. ດຳເນີນການຄົ້ນຄວ້າວິທະຍາສາດ ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ ແລະ ໃຫ້ການບໍລິການວິຊາການແກ່ສັງຄົມ;

5. ໄດ້ຮັບການບຳລຸງ ແລະ ຍົກລະດັບດ້ານຕ່າງໆ ທີ່ກ່ຽວຂ້ອງກັບໜ້າທີ່ ແລະ ວິຊາສະເພາະທີ່ຕົນສອນ ແລະ ຮັບຜິດຊອບ;

6. ສະເໜີຄຳຄິດເຫັນ ແລະ ລາຍງານຜົນການເຄື່ອນໄຫວຂອງຕົນ ໃຫ້ຜູ້ບໍລິຫານທີ່ຕົນຂຶ້ນກັບ;

7. ປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີຂອງຕົນ;

8. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ນະໂຍບາຍຕ່າງໆ ກ່ຽວກັບວຽກງານການສຶກສາຊັ້ນສູງ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຄູຢູ່ສະຖານການສຶກສາຊັ້ນສູງ ມີພັນທະ ດັ່ງນີ້:

1. ປະຕິບັດຕາມລະບຽບວິໄນຂອງສະຖານການສຶກສາຊັ້ນສູງ;

2. ເຄົາລົບ ແລະ ປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງນັກສຶກສາ;

3. ປົກປັກຮັກສາວັດຖຸປະກອນ, ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມ ພາຍໃນສະຖານການສຶກສາຊັ້ນສູງ;

4. ປະຕິບັດຕາມການສັບຊ້ອນ ແລະ ມອບໝາຍ ຂອງການຈັດຕັ້ງ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 ການພັດທະນາຄູຢູ່ສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ຕ້ອງມີການພັດທະນາຄູຂອງຕົນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ, ວິຊາຄູ, ຂໍ້ມູນ ຂ່າວສານ, ພາສາຕ່າງປະເທດ, ທິດສະດີການເມືອງ ແລະ ອື່ນໆ ໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ, ສາມາດປະຕິບັດໜ້າທີ່ໃນການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິພາບ.

**ມາດຕາ 74 ນະໂຍບາຍຕໍ່ຄູຢູ່ສະຖານການສຶກສາຊັ້ນສູງ**

ລັດ ເອົາໃຈໃສ່ຍົກລະດັບຊີວິດການເປັນຢູ່, ຖານະທາງສັງຄົມ ແລະ ຍົກລະດັບວິຊາສະເພາະ, ຄວາມຮູ້, ຄວາມສາມາດຂອງຄູຢູ່ສະຖານການສຶກສາຊັ້ນສູງ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃນການປະຕິບັດໜ້າທີ່ຂອງຄູຢູ່ສະຖານການສຶກສາຊັ້ນສູງ.

**ມາດຕາ 75 ການຄຸ້ມຄອງ ບຸກຄະລາກອນ ແລະ ຄູ ຢູ່ສະຖານການສຶກສາຊັ້ນສູງ**

ຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການທີ່ກ່ຽວຂ້ອງ ຄຸ້ມຄອງບຸກຄະລາກອນ ແລະ ຄູຢູ່ສະຖານການສຶກສາຊັ້ນສູງ ພາກລັດ ແລະ ເອກະຊົນ ດ້ວຍການຕິດຕາມ ກວດກາ ການປະຕິບັດໜ້າທີ່ວຽກງານການສຶກສາຊັ້ນສູງ ໃຫ້ຖືກຕ້ອງຕາມກົດໝາຍ.

ຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຄົ້ນຄວ້າ ບັນຈຸ, ສັບຊ້ອນ ບຸກຄະລາກອນ ແລະ ຄູ ຢູ່ສະຖາບັນການສຶກສາຊັ້ນສູງພາກລັດ ຕາມຕົວເລກລັດຖະກອນ ທີ່ລັດຖະບານອະນຸຍາດໃນແຕ່ລະປີ ຊຶ່ງຄັດເລືອກດ້ວຍການ ສອບເສັງ, ສຳພາດ ຕາມເງື່ອນໄຂ, ມາດຕະຖານ ດ້ານວິຊາສະເພາະ, ລະດັບຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ຄວາມຕ້ອງການຕຳແໜ່ງງານຂອງແຕ່ລະສະຖາບັນການສຶກສາຊັ້ນສູງ ດ້ວຍຄວາມໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

## ໝວດທີ 2
## ນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ

**ມາດຕາ 76 ນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ**

ນັກສຶກສາ ແມ່ນ ຜູ້ທີ່ກຳລັງສຶກສາ ຫຼື ຄົ້ນຄວ້າ ຢູ່ສະຖາບັນການສຶກສາຊັ້ນສູງ ຕາມຫຼັກສູດການສຶກສາຊັ້ນສູງ ຂອງ ສປປ ລາວ.

**ມາດຕາ 77 ສິດ ແລະ ພັນທະຂອງນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ**

ນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ ມີສິດ ດັ່ງນີ້:

1. ນຳໃຊ້ສະຖານທີ່, ຫ້ອງທົດລອງ ແລະ ວັດຖຸປະກອນ ການສຶກສາ, ສື່ການຮຽນ-ການສອນ ແລະ ແຫຼ່ງຄວາມຮູ້ອື່ນ ໃນສະຖາບັນການສຶກສາຊັ້ນສູງ ຕາມລະບຽບການ;
2. ໄດ້ຮັບການປະເມີນຜົນຢ່າງຍຸຕິທຳ ກ່ຽວກັບ ຄຸນສົມບັດ, ຜົນການຮຽນ, ການສອບເສັງ ແລະ ການປ້ອງກັນບົດ;
3. ໄດ້ຮັບປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາ ເມື່ອສຳເລັດການສຶກສາ ຕາມໂຄງການຫຼັກສູດ;
4. ສະເໜີຄຳຄິດເຫັນຂອງຕົນຕໍ່ ຄູ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ ມີພັນທະ ດັ່ງນີ້:

1. ພັດທະນາຕົນເອງໃຫ້ມີ ຄວາມຮູ້, ຄວາມສາມາດ, ຄຸນສົມບັດ ສອດຄ່ອງກັບ ສາມລັກສະນະ ແລະ ຫ້າຫຼັກມູນການສຶກສາ ເພື່ອໃຫ້ເປັນພົນລະເມືອງດີຂອງຊາດ;
2. ເຂົ້າຮ່ວມກິດຈະກຳ ການຮຽນ-ການສອນ, ການຝຶກອົບຮົມຕ່າງໆ ລວມທັງກິດຈະກຳສາທາລະນະປະໂຫຍດ ຕາມແຜນການຂອງສະຖາບັນການສຶກສາຊັ້ນສູງ;
3. ເຄົາລົບ, ປະຕິບັດຕາມລະບຽບພາຍໃນຂອງສະຖາບັນການສຶກສາຊັ້ນສູງ, ຄຳສັ່ງສອນຂອງຄູ, ຜູ້ບໍລິຫານ ແລະ ຜູ້ປົກຄອງ;
4. ປົກປັກຮັກສາ, ບົວລະບັດອາຄານ, ສະຖານທີ່ ແລະ ນຳໃຊ້ວັດຖຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງຂອງສ່ວນລວມ ບໍ່ໃຫ້ເປ່ເພເສຍຫາຍ;
5. ຮ່ວມມື ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການຮຽນ, ການສຶກສາຄົ້ນຄວ້າ ແລະ ການຝຶກອົບຮົມ;
6. ຮ່ວມກັນຕ້ານສິ່ງຫຍໍ້ທໍ້ຕ່າງໆ ໃນສະຖາບັນການສຶກສາຊັ້ນສູງ ແລະ ໃນສັງຄົມ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 ນະໂຍບາຍຕໍ່ນັກສຶກສາຢູ່ສະຖານການສຶກສາຊັ້ນສູງ**

ນັກສຶກສາທີ່ກຳລັງສຶກສາຢູ່ສະຖານການສຶກສາຊັ້ນສູງ ໄດ້ຮັບນະໂຍບາຍດ້ານຕ່າງໆ ເປັນຕົ້ນ ທຶນການສຶກສາ, ທຶນແລກປ່ຽນ ແລະ ການຍ້ອງຍໍ ຕາມລະບຽບການ.

ນັກສຶກສາທີ່ໄດ້ຮັບທຶນການສຶກສາຂອງລັດຖະບານ ເພື່ອໄປຮຽນຢູ່ຕ່າງປະເທດ ຕ້ອງໄປຕາມສາຂາວິຊາທີ່ເປັນບຸລິມະສິດ ຂອງລັດຖະບານ.

ນັກສຶກສາທີ່ໄປສຶກສາຕໍ່ຢູ່ຕ່າງປະເທດ ທີ່ບໍ່ສຳເລັດຕາມຫຼັກສູດ ສາມາດເຂົ້າສຶກສາຕໍ່ຢູ່ສະຖານການສຶກສາຊັ້ນສູງຂອງລາວ ຕາມເງື່ອນໄຂ ແລະ ມາດຕະຖານ ຂອງການທຽບໂອນໜ່ວຍກິດ.

ສຳລັບນັກສຶກສາແລກປ່ຽນ ຈະໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈລະຫວ່າງລັດຖະບານ ຫຼື ສະຖານການສຶກສາຊັ້ນສູງ ຂອງສອງປະເທດ.

**ມາດຕາ 79 ການຄຸ້ມຄອງນັກສຶກສາຢູ່ສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ຕ້ອງມີການຄຸ້ມຄອງນັກສຶກສາ ຢ່າງເປັນລະບົບຄົບຊຸດ ເພື່ອປະຕິບັດໜ້າທີ່ເບິ່ງແຍງ, ດູແລ ນັກສຶກສາ ຕາມກົດລະບຽບຂອງສະຖານການສຶກສາ ແລະ ກົດໝາຍ ກ່ຽວກັບການເຄື່ອນໄຫວໃນຊີວິດປະຈຳວັນ, ການເຄື່ອນໄຫວຢູ່ໃນຫ້ອງຮຽນ, ຢູ່ຫໍພັກ, ການເຄື່ອນໄຫວນອກຫຼັກສູດ, ການຈັດກິດຈະກຳທາງດ້ານກິລາກາຍຍະກຳ, ວັດທະນະທຳ, ສັງຄົມ, ການເມືອງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນຢູ່ສະຖານການສຶກສາຊັ້ນສູງນັ້ນ.

## ພາກທີ IX
## ການລົງທຶນໃສ່ການສຶກສາຊັ້ນສູງ
### ໝວດທີ 1
### ການລົງທຶນຂອງລັດ

**ມາດຕາ 80 ການລົງທຶນຂອງລັດ**

ລັດ ລົງທຶນພັດທະນາການສຶກສາຊັ້ນສູງ ຢ່າງມີແຜນການ, ມີຈຸດສຸມບຸລິມະສິດ ແລະ ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ດ້ວຍການກໍ່ສ້າງໂຄງລ່າງພື້ນຖານ ເປັນຕົ້ນ ອາຄານ, ສະຖານທີ່, ວັດຖຸອຸປະກອນ, ເຕັກນິກ, ພາຫະນະ, ສື່ການຮຽນ-ການສອນ, ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ການສ້າງ, ບຳລຸງ, ພັດທະນາຄູ ແລະ ບຸກຄະລາກອນຂອງສະຖານການສຶກສາຊັ້ນສູງຕາມປະເພດ ແລະ ຮູບແບບ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 81 ແຫຼ່ງທຶນຂອງສະຖານການສຶກສາຊັ້ນສູງຂອງລັດ**

ສະຖານການສຶກສາຊັ້ນສູງຂອງລັດ ມີແຫຼ່ງທຶນ ດັ່ງນີ້:

1. ງົບປະມານແຫ່ງລັດ ຕາມແຜນແບ່ງປັນງົບປະມານໃນແຕ່ລະປີ;
2. ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ ພາຍໃນ ແລະ ຕ່າງປະເທດ;
3. ການບໍລິຈາກຂອງ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

4. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການລົງທຶນຂອງເອກະຊົນ

**ມາດຕາ 82 ການລົງທຶນຂອງເອກະຊົນ**

ບຸກຄົນ, ນິຕິບຸກຄົນ ແລະ ພາກທຸລະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃສ່ການສຶກສາຊັ້ນສູງ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ລວມທັງນະໂຍບາຍສົ່ງເສີມການສຶກສາຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 83 ແຫຼ່ງທຶນຂອງສະຖານການສຶກສາຊັ້ນສູງຂອງເອກະຊົນ**

ສະຖານການສຶກສາຊັ້ນສູງຂອງເອກະຊົນ ມີແຫຼ່ງທຶນ ດັ່ງນີ້:

1. ຊັບສິນ, ທຶນຮອນ ຫຼື ທຶນກູ້ຢືມ ຂອງຜູ້ປະກອບການ;
2. ຄ່າຮຽນ, ຄ່າລົງທະບຽນ, ຄ່າທຳນຽມ, ຄ່າບໍລິການ ຕາມລະບຽບການ;
3. ລາຍຮັບວິຊາການ ເປັນຕົ້ນ ການຄົ້ນຄວ້າວິທະຍາສາດ, ການໃຫ້ຄຳປຶກສາ, ການຈັດການຝຶກອົບຮົມ, ການທົດລອງ, ທົດສອບ, ການຜະລິດ, ການພັດທະນາ ແລະ ການນຳໃຊ້ເຕັກໂນໂລຊີ, ການນຳໃຊ້ອຸປະກອນ ແລະ ເຄື່ອງທົດລອງ, ຄ່າເຊົ່າສະຖານທີ່;
4. ລາຍຮັບອື່ນ ທີ່ໄດ້ມາຢ່າງຖືກຕ້ອງ ຕາມກົດໝາຍ.

## ໝວດທີ 3
## ການລົງທຶນຮ່ວມ

**ມາດຕາ 84 ການລົງທຶນຮ່ວມ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃສ່ການສຶກສາຊັ້ນສູງ ເປັນຕົ້ນ ການພັດທະນາໂຄງລ່າງພື້ນຖານ, ການປະກອບວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ, ການບໍລິການວິຊາການ ແລະ ການຄົ້ນຄວ້າວິທະຍາສາດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ລວມທັງນະໂຍບາຍສົ່ງເສີມການສຶກສາຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 85 ແຫຼ່ງທຶນຂອງສະຖານການສຶກສາຊັ້ນສູງທີ່ມີການລົງທຶນຮ່ວມ**

ສະຖານການສຶກສາຊັ້ນສູງທີ່ມີການລົງທຶນຮ່ວມ ມີແຫຼ່ງທຶນ ດັ່ງນີ້:

1. ງົບປະມານແຫ່ງລັດ ຕາມແຜນແບ່ງປັນງົບປະມານໃນແຕ່ລະປີ;
2. ທຶນຊ່ວຍເຫຼືອລ້າ;
3. ຊັບສິນ, ທຶນຮອນ ແລະ ທຶນກູ້ຢືມ ຂອງຜູ້ຮ່ວມທຶນ;

4. ຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

5. ລາຍຮັບວິຊາການ ເປັນຕົ້ນ ການຄົ້ນຄວ້າວິທະຍາສາດ, ການໃຫ້ຄຳປຶກສາ, ການຈັດການຝຶກອົບຮົມ, ການທົດລອງ, ທົດສອບ, ການຜະລິດ, ການພັດທະນາ ແລະ ການນຳໃຊ້ເຕັກໂນໂລຊີ, ການນຳໃຊ້ອຸປະກອນ ແລະ ເຄື່ອງທົດລອງ, ຄ່າເຊົ່າສະຖານທີ່;

6. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ X
# ຂໍ້ຫ້າມ

## ມາດຕາ 86 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຸດຈະລິດ ໃນການຈັດຕັ້ງການຮຽນ-ການສອນ, ການສອບເສັງ ແລະ ການປ້ອງກັນ ບົດລາຍງານໂຄງການຈົບຊັ້ນ ຫຼື ວິທະຍານິພົນ;

2. ປອມແປງເອກະສານ, ບິດເບືອນຂໍ້ມູນ ກ່ຽວກັບປະກາສະນີຍະບັດ ແລະ ອອກປະກາສະນີຍະບັດການສຶກສາຊັ້ນສູງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ເຄື່ອນໄຫວທີ່ເປັນການແຕະຕ້ອງກຽດສັກສີ ແລະ ບົດບາດຂອງຄູ, ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ;

4. ໂຄສະນາຊວນເຊື່ອ ກ່ຽວກັບວຽກງານການສຶກສາຊັ້ນສູງທີ່ເກີນຄວາມເປັນຈິງ;

5. ພົວພັນ, ບໍລິການ, ຊື້ ຂາຍ, ເສບ ສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ, ອະນາຈານ, ຫຼິ້ນການພະນັນທຸກປະເພດ, ບໍລິການບັນເທີງ ແລະ ສິ່ງສຽງດັງ ທັງຢູ່ພາຍໃນ ແລະ ບ່ອນໃກ້ຄຽງສະຖານການສຶກສາຊັ້ນສູງ;

6. ພົວພັນຊູ້ສາວທີ່ຂັດກັບກົດໝາຍ, ກົດລະບຽບຂອງສະຖານການສຶກສາຊັ້ນສູງ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

7. ຊຸກຍູ້, ສົ່ງເສີມ ໃຫ້ນັກສຶກສາລະເມີດກົດໝາຍ ແລະ ກົດລະບຽບຂອງສະຖານການສຶກສາຊັ້ນສູງ;

8. ປະພຶດບໍ່ຖືກຕ້ອງ ຕາມຮີດຄອງປະເພນີອັນດີງາມຂອງຊາດ ພາຍໃນສະຖານການສຶກສາຊັ້ນສູງ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 87 ຂໍ້ຫ້າມສຳລັບສະຖານການສຶກສາຊັ້ນສູງ

ຫ້າມສະຖານການສຶກສາຊັ້ນສູງ ມີພຶດຕິກຳ ດັ່ງນີ້:

1. ຮັບນັກສຶກສາເກີນແຜນກຳນົດ ຫຼື ບໍ່ຖືກຕ້ອງຕາມທີ່ໄດ້ປະກາດໄວ້;

2. ຈຳແນກ ແລະ ຈຳກັດທາງດ້ານ ເພດ, ເຜົ່າ, ສາສະໜາ, ສະຖານະພາບທາງຮ່າງກາຍ, ຖານະທາງເສດຖະກິດ ແລະ ສັງຄົມ;

3. ຊື້ ຂາຍ, ໂຄສະນາ, ສົ່ງເສີມ ເຄື່ອງດື່ມທີ່ມີທາດເຫຼົ້າ, ສິ່ງເສບຕິດ, ອາຫານ ແລະ ເຄື່ອງດື່ມທີ່ບໍ່ມີຄຸນນະພາບ;

4. ໂອນ ຫຼື ແລກປ່ຽນ ອາຄານ ຫຼື ສິດນຳໃຊ້ທີ່ດິນ ແລະ ຊັບສິນອື່ນຂອງຕົນ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການ ແລະ ກິລາ;

5. ນຳໃຊ້ສະຖານການສຶກສາຊັ້ນສູງ ເປັນບ່ອນດຳເນີນທຸລະກິດ ທີ່ສົ່ງຜົນກະທົບທີ່ບໍ່ດີຕໍ່ການຮຽນ-ການສອນ;

6. ກຳນົດຄ່າຮຽນ, ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າບໍລິການລາຍຮັບວິຊາການ ໂດຍບໍ່ສອດຄ່ອງກັບລະບຽບການ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 88 ຂໍ້ຫ້າມສຳລັບ ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ**

ຫ້າມ ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ ມີພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຕໍ່ການສິດສອນ ແລະ ວຽກງານທີ່ຕົນຮັບຜິດຊອບ;

2. ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່, ໃຫ້ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ ແລະ ພັກພວກຂອງຕົນ;

3. ບິດເບືອນເນື້ອໃນຫຼັກສູດ, ນຳໃຊ້ການສອນເພີ່ມ ໂດຍເປັນການບັງຄັບ;

4. ນາບຂູ່, ຈຳແນກ, ທຸບຕີ, ຮ້າຍດ່າ, ທາລຸນ ແລະ ລຳອຽງຕໍ່ນັກສຶກສາ, ຄູ ແລະ ບຸກຄະລາກອນ ດ້ວຍກັນ;

5. ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ ພາຍໃນສະຖານການສຶກສາຊັ້ນສູງ ແລະ ສັງຄົມ;

6. ນຸ່ງເຄື່ອງແບບລັດຖະກອນຄູ ເຂົ້າໃນຮ້ານບັນເທີງ ຫຼື ສະຖານທີ່ອື່ນທີ່ບໍ່ເໝາະສົມ;

7. ໂຄສະນາສົ່ງເສີມ ຫຼື ດື່ມເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານການສຶກສາ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 89 ຂໍ້ຫ້າມສຳລັບນັກສຶກສາ**

ຫ້າມນັກສຶກສາ ມີພຶດຕິກຳ ດັ່ງນີ້:

1. ລະເມີດລະບຽບວິໄນຂອງສະຖານການສຶກສາຊັ້ນສູງ;

2. ໃຫ້ສິນບົນແກ່ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ;

3. ນຸ່ງເຄື່ອງແບບນັກສຶກສາເຂົ້າໃນຮ້ານບັນເທີງ ຫຼື ສະຖານທີ່ອື່ນທີ່ບໍ່ເໝາະສົມ;

4. ຄອບຄອງອາວຸດ, ວັດຖຸລະເບີດ ແລະ ສານເຄມີ ທີ່ຕ້ອງຫ້າມ;

5. ປະພຶດຕົນບໍ່ສຸພາບ, ເວົ້າຈາຫຍາບຄາຍ, ໃຊ້ຄວາມຮຸນແຮງຕໍ່ຄູ, ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ ແລະ ບຸກຄົນອື່ນໃນສະຖານການສຶກສາ ແລະ ສັງຄົມ;

6. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບຢູ່ໃນສະຖານການສຶກສາຊັ້ນສູງ ແລະ ສັງຄົມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ XI
## ສະພາການສຶກສາຊັ້ນສູງແຫ່ງຊາດ

**ມາດຕາ 90 ສະພາການສຶກສາຊັ້ນສູງແຫ່ງຊາດ**

ສະພາການສຶກສາຊັ້ນສູງແຫ່ງຊາດ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ, ມີພາລະບົດບາດເປັນເສນາທິການ ໃນການໃຫ້ຄຳປຶກສາແກ່ລັດຖະບານ ກ່ຽວກັບການເຄື່ອນໄຫວທາງວິຊາການຂອງສະຖານການສຶກສາຊັ້ນສູງ ໂດຍມີຫ້ອງການສະພາການສຶກສາຊັ້ນສູງ ເປັນຈຸດປະສານງານລວມ ແລະ ເປັນກອງເລຂາ ຊຶ່ງຕັ້ງຢູ່ກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 91 ສິດ ແລະ ໜ້າທີ່ຂອງສະພາການສຶກສາຊັ້ນສູງແຫ່ງຊາດ**

ສະພາການສຶກສາຊັ້ນສູງແຫ່ງຊາດ ມີ ສິດ ແລະ ໜ້າທີ່ ຕາມພາລະບົດບາດ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ການສ້າງຕັ້ງ, ຂະຫຍາຍ ແລະ ຍຸບເລີກ ສະຖານການສຶກສາຊັ້ນສູງ;

2. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ຕຳແໜ່ງວິຊາການຄູຊັ້ນ ສາດສະດາຈານ ແລະ ຮອງສາດສະດາຈານ ເພື່ອນຳສະເໜີນາຍົກລັດຖະມົນຕີ ພິຈາລະນາ;

3. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ຫົວຂໍ້ ແລະ ຜົນການຄົ້ນຄວ້າວິທະຍາສາດ ລະດັບຊາດຂອງສະຖານການສຶກສາຊັ້ນສູງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 92 ໂຄງປະກອບບຸກຄະລາກອນຂອງສະພາການສຶກສາຊັ້ນສູງແຫ່ງຊາດ**

ໂຄງປະກອບບຸກຄະລາກອນ ຂອງສະພາການສຶກສາຊັ້ນສູງແຫ່ງຊາດ ມີ ດັ່ງນີ້:

| | |
|---|---|
| 1. ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ | ເປັນປະທານ; |
| 2. ລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ເປັນຮອງປະທານ; |
| 3. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ | ເປັນຮອງປະທານ ທັງເປັນຜູ້ປະຈຳການ; |
| 4. ຮອງລັດຖະມົນຕີກະຊວງພາຍໃນ | ເປັນກຳມະການ; |
| 5. ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ | ເປັນກຳມະການ; |
| 6. ຫົວໜ້າສະຖານການສຶກສາຊັ້ນສູງຂອງລັດ ຈຳນວນໜຶ່ງ | ເປັນກຳມະການ; |
| 7. ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ | ເປັນກຳມະການ; |

8. ຜູ້ຊົງຄຸນວຸດທິ ສາມທ່ານ ທີ່ແຕ່ງຕັ້ງໂດຍປະທານສະພາການສຶກສາຊັ້ນສູງແຫ່ງຊາດ ເປັນກຳມະການ;

9. ຫົວໜ້າກົມການສຶກສາຊັ້ນສູງ ເປັນກຳມະການ;

10. ຫົວໜ້າຫ້ອງການສະພາວິທະຍາສາດແຫ່ງຊາດ ເປັນກຳມະການ;

11. ປະທານສະມາຄົມການສຶກສາພາກເອກະຊົນ ເປັນກຳມະການ.

ໃນກໍລະນີຈຳເປັນໂຄງປະກອບບຸກຄະລາກອນຂອງສະພາການສຶກສາຊັ້ນສູງແຫ່ງຊາດ ອາດມີການປ່ຽນແປງຕາມການຕົກລົງຂອງນາຍົກລັດຖະມົນຕີ.

# ພາກທີ XII

# ການຄຸ້ມຄອງ ແລະ ກວດກາວຽກງານການສຶກສາຊັ້ນສູງ

## ໝວດທີ 1

## ການຄຸ້ມຄອງ

### ມາດຕາ 93 ອົງການຄຸ້ມຄອງວຽກງານການສຶກສາຊັ້ນສູງ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານການສຶກສາຊັ້ນສູງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງການສຶກສາຊັ້ນສູງ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 94 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ

ໃນການຄຸ້ມຄອງວຽກງານການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ໂຄງການພັດທະນາການສຶກສາຊັ້ນສູງ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານການສຶກສາຊັ້ນສູງ;

4. ຄຸ້ມຄອງໂດຍກົງ, ຮອບດ້ານສະຖານການສຶກສາຊັ້ນສູງ ທີ່ຂຶ້ນກັບຕົນ ແລະ ສະຖານການສຶກສາຊັ້ນສູງພາກເອກະຊົນ ຕາມພາລະບົດບາດຂອງຕົນ ແລະ ການມອບໝາຍຂອງລັດຖະບານ;

5. ຄຸ້ມຄອງທາງດ້ານວິຊາການຂອງສະຖານການສຶກສາຊັ້ນສູງທຸກປະເພດ;

6. ຄົ້ນຄວ້າການຂໍອະນຸຍາດສ້າງຕັ້ງ ແລະ ຍຸບເລີກ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງທຽບເທົ່າມະຫາວິທະຍາໄລ ເພື່ອສະເໜີລັດຖະບານ ພິຈາລະນາ;

7. ອະນຸຍາດສ້າງຕັ້ງ ແລະ ຍຸບເລີກວິທະຍາໄລ ແລະ ສະຖາບັນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

8. ອະນຸມັດນຳໃຊ້ ແລະ ຍົກເລີກຫຼັກສູດການສຶກສາຊັ້ນສູງທຸກລະດັບ;

9. ຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການສຶກສາຊັ້ນສູງ;

10. ຊີ້ນຳການສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດ ຂອງຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາຊັ້ນສູງ;

11. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກັບວຽກງານການສຶກສາຊັ້ນສູງ;

12. ພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາຊັ້ນສູງ;

13. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານການສຶກສາຊັ້ນສູງ ຕໍ່ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 95 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານການສຶກສາຊັ້ນສູງ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານການສຶກສາຊັ້ນສູງ ເປັນແຜນການ, ແຜນງານ ແລະ ໂຄງການສະເພາະຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານການສຶກສາຊັ້ນສູງ;

3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ, ກວດການ ແລະ ປະເມີນຜົນ ການປະຕິບັດແຜນການ, ແຜນງານ ແລະ ໂຄງການພັດທະນາການສຶກສາຊັ້ນສູງ;

4. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການສຶກສາຊັ້ນສູງ;

5. ພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາຊັ້ນສູງ ຕາມການມອບໝາຍ;

6. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານການສຶກສາຊັ້ນສູງ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 96 ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານການສຶກສາຊັ້ນສູງ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການສຶກສາທິການ ແລະ ກິລາ ໃນການຄຸ້ມຄອງ ແລະ ພັດທະນາວຽກງານການສຶກສາຊັ້ນສູງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາ

**ມາດຕາ 97 ອົງການກວດກາວຽກງານການສຶກສາຊັ້ນສູງ**

ອົງການກວດກາວຽກງານການສຶກສາຊັ້ນສູງ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານການສຶກສາຊັ້ນສູງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 93 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 98 ເນື້ອໃນການກວດກາ**

ການກວດກາວຽກງານການສຶກສາຊັ້ນສູງ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາຊັ້ນສູງ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການຄຸ້ມຄອງວຽກງານການສຶກສາຊັ້ນສູງ;
3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງຄູ ແລະ ບຸກຄະລາກອນຢູ່ສະຖານການສຶກສາຊັ້ນສູງ;
4. ການເຄື່ອນໄຫວຂອງຜູ້ປະກອບການດ້ານການສຶກສາຊັ້ນສູງ;
5. ການນຳໃຊ້ງົບປະມານ ແລະ ການເງິນຂອງອົງການຄຸ້ມຄອງວຽກງານການສຶກສາຊັ້ນສູງ.

**ມາດຕາ 99 ຮູບການການກວດກາ**

ການກວດກາວຽກງານການສຶກສາຊັ້ນສູງ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 100 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 101 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XIV
## ບົດບັນຍັດສຸດທ້າຍ

**ມາດຕາ 102 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 103 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້